# ເຊໂປນມາຍຫູເດ

ໜັງສືຂ່າວ ຂອງບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ

ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万 象 矿 业 有 限 公 司
CHIFENG LXML SEPON

## IN THIS ISSUE

ສິງຫາ 2021


ປະທານປະເທດແຫ່ງ ສປປ ລາວ ປະດັບຫຼຽນໄຊແຮງງານຊັ້ນ 1 ໃຫ້ທ່ານ ສະໝານ ອະເນກາ ໜ້າ 3

ພົບວັດຖຸບູຮານ ອາຍຸກວ່າ 6,000 ປີ ທີ່ໂຄງການເຊໂປນ ໜ້າ 7

ສໍາພາດລົງເລິກ ກັບ ທ່ານ ຄາຣ ເບເກີ້ ດູລີ້ ໜ້າ 8

ພົບກັບນັກບິນໂດຣນຂອງ LXML ໜ້າ 8












ທ່ານ ສັນຕິພາບ ພົມວິຫານ (5 ຈາກຊ້າຍ), ທ່ານ ຝູ ເຊຍເຊິນ (4 ຈາກຊ້າຍ), ແລະ ທ່ານ ພໍ ແຮຣິສ (6 ຈາກຂວາ) ທີ່ງານອັນເຊີນຮູບຫຼໍ່ ປະທານໄກສອນ ພົມວິຫານ



ປອ ໄຊສົມພອນ ພົມວິຫານ (ທີ 4 ຈາກຊ້າຍ) ຖືແທ່ງຄຳ ຮ່ວມກັບ ທ່ານ ຝູ ເຊຍເຊິນ (ທີ 5 ຈາກຊ້າຍ), ທ່ານ ສັນຕິພາບ ພົມວິຫານ (ທີ 6 ຈາກຊ້າຍ) ພ້ອມດ້ວຍຄະນະຈາກ ສະພາແຫ່ງຊາດ, ແຂວງສະຫວັນນະເຂດ ແລະ ຄະນະບໍລິຫານຂອງ LXML.



ທ່ານ ຝູ ເຊຍເຊິນ ສະແດງຄວາມເຄົາລົບ ອະນຸສາວະລີຮູບຫຼໍ່ເຄິ່ງຄີງ ຂອງ ອາດີດ ປະທານ ໄກສອນ ພົມວິຫານ ທີ່ເມືອງວິລະບູລີ ໃນວັນທີ 15 ມິຖຸນາ 2021.

# ປະທານ ສະພາແຫ່ງຊາດ ເຂົ້າຮ່ວມພິທີ ອັນເຊີນຮູບຫຼໍ່ເຄິ່ງຄີງ ປະທານໄກສອນພົມວິຫານຂຶ້ນປະດິດສະຖານ ທີ່ອະນຸສອນສະຖານ ເມືອງ ວິລະບູລີ

**15 ມິຖຸນາ 2021 -** ປະທານ ສະພາແຫ່ງຊາດ ພະນະທ່ານ ປອ ໄຊສົມພອນ ພົມວິຫານ ໄດ້ເຂົ້າຮ່ວມພິທີອັນເຊີນຮູບຫຼໍ່ເຄິ່ງຄີງປະທານ ໄກສອນ ພົມວິຫານ ທັງເປັນວິລະບູລຸດຂອງຊາດ ກໍຄື ປວງຊົນລາວ ຂຶ້ນປະດິດສະຖານ ທີ່ອະນຸສອນສະຖານຂອງທ່ານປະທານທີ່ເມືອງ ວິລະບູລີ, ແຂວງສະຫວັນນະເຂດ.

ປອ ໄຊສົມພອນ ພົມວິຫານ ພ້ອມຄະນະລວມທັງ ເຈົ້າແຂວງໆສະຫວັນນະເຂດ ທ່ານ ສັນຕິພາບ ພົມວິຫານ, ຍັງໄດ້ລົງຢ້ຽມຢາມໂຄງການຄຳ-ທອງເຊໂປນ ຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ເພື່ອຢ້ຽມຊົມການຜະລິດ ແລະ ຮັບຟັງການລາຍງານກ່ຽວກັບ ຜົນສຳເລັດດ້ານວຽກງານສິ່ງແວດລ້ອມ, ຄວາມປອດໄພ ແລະ ການພັດທະນາຊຸມຊົນຂອງບໍລິສັດ. LXML ເປັນວິສາຫະກິດແບບຢ່າງໃນ ສປປ ລາວ ແລະ ໄດ້ຮັບລາງວັນຍ້ອງຍໍລະດັບດີເລີດ (A+) ຢ່າງສະເໝີມາ ເຊິ່ງມອບໂດຍ ກະຊວງພະລັງງານ ແລະ ບໍ່ແຮ່ ໃນດ້ານການປະຕິບັດໄດ້ຕາມມາດຕະຖານສາກົນດ້ານການຂຸດຄົ້ນບໍ່ແຮ່, ການປົກປັກຮັກສາສິ່ງແວດລ້ອມ, ການພັດທະນາຊຸມຊົນ ແລະ ມາດຕະຖານດ້ານຄວາມປອດໄພໃນການດຳເນີນໂຄງການ.

ອະນຸສອນສະຖານ-ຮູບຫຼໍ່ເຄິ່ງຄີງປະທານ ໄກສອນ ພົມວິຫານ ແມ່ນໄດ້ຮັບທຶນການກໍ່ສ້າງຈາກກອງທຶນພັດທະນາທ້ອງຖິ່ນ ທີ່ສະໜັບສະໜູນໂດຍ ບໍລິສັດ LXML *(ອ່ານເພີ່ມໜ້າ 10)*. ນອກຈາກນີ້ແລ້ວ ໃນຜ່ານມາບໍລິສັດຍັງໄດ້ກໍ່ສ້າງຫໍວັດທະນະທຳເມືອງວິລະບູລີ ເພື່ອຊຸກຍູ້ການທ່ອງທ່ຽວໃນພາກພື້ນ ນຳອີກດ້ວຍ.

**ທ່ານ ສະໝານ ອະເນກາ, ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ: "ບໍ່ວ່າຍາມໃດກໍຕາມ ບໍລິສັດ LXML ແມ່ນຍັງສືບຕໍ່ສະໜັບສະໜູນການພັດທະນາບຸກຄະລາກອນ ແລະ ຊຸມຊົນເຈົ້າພາບ. ບໍລິສັດມີຄວາມພາກພູມໃຈທີ່ໄດ້ປະກອບສ່ວນສ້າງຮູບຫຼໍ່ເຄິ່ງຄີງ ກໍຄື ອະນຸສາວະລີ ປະດິດສະຖານໄວ້ໃນໃຈກາງເມືອງວິລະບູລີ, ແຂວງ ສະຫວັນນະເຂດ ທີ່ເປັນແຂວງຖິ່ນກຳເນີດຂອງພະນະທ່ານ ໄກສອນ ພົມວິຫານ-ຜູ້ກໍ່ຕັ້ງພັກປະຊາຊົນປະຕິວັດລາວ ແລະ ສປປ ລາວ ເພື່ອເປັນກຽດອັນສູງສົ່ງໃຫ້ແກ່ພະນະທ່ານ."

ພິທີທີ່ເປັນນິມິດໝາຍສຳຄັນຄັ້ງນີ້ແມ່ນໄດ້ຈັດຂຶ້ນທີ່ອະນຸສອນສະຖານ ກໍຄືຫ້ອງການເມືອງວິລະບູລີ. ພາຍໃຕ້ການນຳພາຂອງການນຳເມືອງວິລະບູລີ ໂດຍສົມທົບກັບບໍລິສັດ LXML, ການກໍ່ສ້າງເດີ່ນສວນອ້ອມອະນຸສອນສະຖານປະທານ ໄກສອນ ພົມວິຫານ ແມ່ນໄດ້ເລີ່ມຂຶ້ນໃນເດືອນ ກຸມພາ 2021.

ໃນຜ່ານມາ, ນັບແຕ່ປີ 2003, ກອງທຶນພັດທະນາຊຸມຊົນຂອງ LXML ໄດ້ລົງທຶນ US$10 ລ້ານ ສະໜັບສະໜູນເມືອງວິລະບູລີ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດລາວ.

ໃນຖານະຄູ່ຮ່ວມພັດທະນາສຳຄັນໃນ ສປປ ລາວ, LXML ມີຄວາມມຸ່ງໝັ້ນເປັນບໍລິສັດຂຸດຄົ້ນບໍ່ແຮ່ດີເລີດ ແລະ ສ້າງຄວາມອຸດົມຮັ່ງມີໃຫ້ແກ່ສັງຄົມ.

# ກຳມະການກົມການເມືອງ ສູນກາງພັກ, ປະທານຄະນະ ກວດກາສູນກາງພັກ ຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນ

**16 ກໍລະກົດ 2021 -** ພະນະທ່ານ ຄຳພັນ ພົມມະທັດ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານ ຄະນະກວດກາສູນກາງພັກ, ປະທານ ອົງການກວດກາແຫ່ງລັດ ແລະ ຫົວໜ້າ ອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ພ້ອມດ້ວຍຄະນະ ແລະ ການນຳແຂວງສະຫວັນນະເຂດ ໄດ້ໃຫ້ກຽດຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນ ເພື່ອຊົມການຜະລິດຄຳທີ່ເພີ່ມຂຶ້ນ ກໍຄື ແຜນການກ່ຽວກັບໂຄງການຄຳ, ພ້ອມທັງຮັບຟັງການລາຍງານກ່ຽວກັບ ຜົນສຳເລັດດ້ານການປະຕິບັດວຽກງານສິ່ງແວດລ້ອມ, ຄວາມປອດໄພ, ມາດຕະການປ້ອງກັນ COVID-19, ວຽກງານພັດທະນາຊຸມຊົນຂອງບໍລິສັດ ແລະ ການຮ່ວມມືທີ່ດີຢ່າງສະເໝີມາ ກັບອຳນາດການປົກຄອງທ້ອງຖິ່ນ.



**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ: "LXML ມີຄວາມມຸ່ງໝັ້ນ ຕໍ່ການຮ່ວມມື ແລະ ເຮັດວຽກຮ່ວມກັນຢ່າງຕັ້ງໜ້າ ກັບລັດຖະບານ ໃນນາມຄູ່ຮ່ວມພັດທະນາ. LXML ມີຄວາມພາກພູມໃຈສຳລັບການປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ."

# LXML ຊະນະເລີດ ລາງວັນທຸລະກິດ ອາຊຽນ ດີເດັ່ນ 2020

**13 ພະຈິກ 2020** - LXML ໄດ້ຮັບລາງວັນ ທຸລະກິດ ອາຊຽນ ດີເດັ່ນ ສຳລັບຜົນງານໃນ 'ການສະກັດກັ້ນ ການລະບາດພະຍາດ COVID-19.' ພິທີປະກາດ ແລະ ມອບຮັບລາງວັນ ແມ່ນໄດ້ຈັດຂຶ້ນທີ່ ກອງປະຊຸມສຸດຍອດ ທຸລະກິດ ແລະ ການລົງທຶນອາຊຽນ 2020 (ASEAN Business and Investment Summit – ABIS 2020) ທີ່ນະຄອນຫຼວງຮ່າໂນ້ຍ, ສສ ຫວຽດນາມ.

ລາງວັນດັ່ງກ່າວຮັບຮູ້ທຸລະກິດດີເດັ່ນ ໃນພາກພື້ນ ທີ່ໄດ້ປະກອບສ່ວນ ຕໍ່ກັບການປ້ອງ ກັນການລະບາດພະຍາດ COVID -19. LXML ຖືກຄັດເລືອກຈາກ ຫຼາຍຮ້ອຍຫົວໜ່ວຍທຸລະກິດ ແລະ ນັກລົງທຶນໃນພາກພື້ນ ແລະ ໜຶ່ງໃນຫ້າບໍລິສັດຈາກ ສປປ ລາວ ທີ່ໄດ້ຮັບລາງວັນນີ້.

**ທ່ານ ພໍ ແຮຣິສ, ຜູ້ຈັດການໃຫຍ່ LXML** ໄດ້ກ່າວວ່າ: "ລາງວັນອັນຊົງກຽດນີ້ ເປັນໝາກຜົນ ຂອງຄວາມມຸ່ງໝັ້ນ ແລະ ຄວາມເອົາໃຈໃສ່ສູງສຸດຂອງ ລັດຖະບານລາວ ແລະ ພະນັກງານຂອງ LXML ໃນການຄວບຄຸມ ແລະ ປ້ອງກັນການແຜ່ລະບາດຂອງພະຍາດ COVID-19. ທີ່ LXML ພວກເຮົາໄດ້ຮັບມືກັບການລະບາດນີ້ ຄືກັນກັບການຮັບມືກັບວິກິດການໃດໜຶ່ງ ກ່ອນທີ່ມັນໄດ້ເກີດຂຶ້ນເປັນວິກິດຕົວຈິງ. ຜ່ານການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຄວບຄຸມຢ່າງຕັ້ງໜ້າ ແລະ ທັນການ, ພວກເຮົາຈຶ່ງສາມາດ ຮັກສາພະນັກງານຂອງພວກເຮົາຫຼາຍກວ່າ 3.500 ຄົນ ແລະ ສະມາຊິກຊຸມຊົນ 40.000 ຄົນ ໃຫ້ປອດໄພ ແລະ ປັດສະຈາກ ການຕິດເຊື້ອ COVID-19. ພວກເຮົາຕ້ອງສືບຕໍ່ລະມັດລະວັງ ຈົນກວ່າ ການລະບາດຈະສິ້ນສຸດລົງ."

LXML ໄດ້ລິເລີ່ມແຜນງານປ້ອງກັນຕ່າງໆ ຕັ້ງແຕ່ ເດືອນ ມັງກອນ 2020 ກ່ອນທີ່ພະຍາດ COVID-19 ໄດ້ເຂົ້າມາແຜ່ໃນ ສປປ ລາວ. ແຜນງານປ້ອງກັນດັ່ງກ່າວລວມມີ ລະບຽບການຄວບຄຸມ, ການສື່ສານ ແລະ ປູກຈິດສຳນຶກກ່ຽວກັບ ພະຍາດ ແລະ ວິທີການປ້ອງກັນ, ການຈຳກັດ-ເວັ້ນໄລຍະຫ່າງໃນໂອກາດຕ່າງໆ ແລະ ໄດ້ສຸມໃສ່ສົ່ງເສີມ ການປ່ຽນແປງດ້ານວັດທະນະທຳ ແລະ ພຶດຕິກຳ ເພື່ອໃຫ້ທ່ວງທັນສອດຄ່ອງກັບ 'ວິທີການດຳລົງຊີວິດແບບໃໝ່' ທີ່ມີການປ່ຽນແປງໄປເລື້ອຍໆ. ຍ້ອນຄວາມພະຍາຍາມ ແລະ ການລິເລີ່ມແຜນງານເຫຼົ່ານີ້, LXML ຈຶ່ງເປັນ 1 ໃນ 5 ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ສືບຕໍ່ ດຳເນີນກິດຈະການໃນໄລຍະ ລ໋ອກດາວໃນ ສປປ ລາວ ໃນປີ 2020. ໂດຍຮ່ວມມືກັບ ລັດຖະບານ, LXML ໄດ້ສະໜອງການສະໜັບສະໜູນເຖິງ US$370.000 ສຳລັບ ວຽກງານ ສະກັດກັ້ນ COVID-19.

LXML ສືບຕໍ່ມຸ່ງໝັ້ນ ສະໜັບສະໜູນຄວາມພະຍາຍາມຂອງ ລັດຖະບານ ໃນການ ສະກັດກັ້ນການລະບາດ COVID-19 ແລະ ສືບຕໍ່ມຸ່ງໝັ້ນ ໃນການຮັກສາພະນັກງານຂອງບໍລິສັດ ແລະ ຊຸມຊົນໃຫ້ປອດໄພຈາກ ພະຍາດ COVID-19.

ໃນ 58 ບໍລິສັດ ທີ່ໄດ້ຮັບລາງວັນ ABA 2020, ໃນນັ້ນມີ 5 ບໍລິສັດຈາກ ສປປ ລາວ:

1. ອົງສະນາ ເນຊົງ ສຸວັນນະພູມ ສຳລັບການພັດທະນາທັກສະທີ່ດີເລີດ
2. LXML ສຳລັບມາດຕະການປ້ອງກັນເຊື້ອພະຍາດ COVID-19 ທີ່ດີເລີດ
3. ໂຮງງານຜະລິດນໍ້າດື່ມ ແລະ ນໍ້າກ້ອນ ໂລມາຄຳ ສຳລັບທຸລະກິດແບບມີສ່ວນຮ່ວມທີ່ດີເລີດ
4. ປາກຊ່ອງພັດທະນາ ຂາອອກ-ຂາເຂົ້າ ຈຳກັດ ສຳລັບທຸລະກິດທີ່ດີເລີດຂອງປະເທດປະຈຳປີ
5. ສະຫວັນປາຊີຟິກພັດທະນາຈຳກັດ ສຳລັບທຸລະກິດທີ່ດີເລີດຂອງປະເທດປະຈຳປີ

# LXML ໄດ້ຮັບລາງວັນທຸລະກິດຊັ້ນນຳດີເດັ່ນ ປະຈຳປີ 2019

**14 ກຸມພາ 2020** - LXML ເປັນໜຶ່ງໃນ 55 ບໍລິສັດໃນ ສປປ ລາວ ທີ່ເປັນກຽດຂຶ້ນຮັບໂລ້ລາງວັນທຸລະກິດຊັ້ນນຳດີເດັ່ນ ປະຈຳປີ 2019 ເຊິ່ງເປັນຜົນງານມາຈາກ ການປະກອບສ່ວນດ້ານຜົນປະໂຫຍດ ໃຫ້ແກ່ເສດຖະກິດ-ສັງຄົມ ຕໍ່ການພັດທະນາແບບຍືນຍົງຂອງ ສປປ ລາວ. ພິທີມອບຮັບໂລ້ລາງວັນດັ່ງກ່າວ ແມ່ນໄດ້ຈັດຂຶ້ນ ທີ່ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານກິຕິມະສັກຂອງທ່ານຮອງນາຍົກລັດຖະມົນຕີ - ລັດຖະມົນຕີກະຊວງການເງິນ. ຕາງໜ້າໃຫ້ບໍລິສັດ ຂຶ້ນຮັບໂລ້ລາງວັນອັນຊົງກຽດໃນຄັ້ງນີ້ແມ່ນທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML.




ໂລ້ລາງວັນຄັ້ງນີ້ແມ່ນເປັນຄັ້ງທີສາມ ທີ່ທາງບໍລິສັດ LXML ໄດ້ຍາດມາໄດ້ຈາກເວທີແຂ່ງຂັນອັນດຽວກັນ. ໃນປີ 2016, LXML ເຄີຍໄດ້ຮັບສາມລາງວັນ ຄື: (i) 'ລາງວັນທຸລະກິດດີເດັ່ນ ຈາລຶກວັນຄົບຮອບ 40 ປີ' ຂອງ ສປປ ລາວ ຈາກຜົນງານການປະກອບສ່ວນຂອງບໍລິສັດ LXML ຕໍ່ການພັດທະນາເສດຖະກິດ-ສັງຄົມ, ການສ້າງວຽກເຮັດງານທຳ ແລະ ຜົນງານທີ່ດີໃນການຄຸ້ມຄອງດ້ານສິ່ງແວດລ້ອມ; (ii) ລາງວັນອາຊຽນ ສຳລັບບໍລິສັດຂຸດຄົ້ນບໍ່ແຮ່ດີເດັ່ນ; ແລະ (iii) ລາງວັນອາຊຽນສຳລັບບໍລິສັດທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ ແລະ ການພັດທະນາຊຸມຊົນ. ນອກຈາກນັ້ນ LXML ກໍໄດ້ຮັບລາງວັນສຳລັບການປະກອບສ່ວນຢ່າງພົ້ນເດັ່ນຕໍ່ຂະແໜງການທຸລະກິດ ໃນ ສປປ ລາວ ເປັນ 2 ປີຕິດຕໍ່ກັນ ຄືໃນປີ 2018 ແລະ 2019.

**ທ່ານ ສະໝານ ອະເນກາ** ໄດ້ກ່າວວ່າ: "LXML ມີຄວາມ ມຸ່ງໝັ້ນ ໃນການເປັນຕົ້ນແບບທາງດ້ານການຂຸດຄົ້ນບໍ່ແຮ່ ແລະ ການສ້າງຄວາມຮັ່ງມີໃຫ້ແກ່ສັງຄົມ. ພວກເຮົາມີຄວາມພາກພູມໃຈທີ່ໄດ້ເປັນຄູ່ຮ່ວມພັດທະນາ ແລະ ຂ້າພະເຈົ້າຖືເປັນກຽດຢ່າງສູງ ທີ່ໄດ້ຂຶ້ນມາຮັບລາງວັນນີ້ ໂດຍເປັນຜູ້ຕາງໜ້າໃຫ້ແກ່ພະນັກງານ ຂອງ LXML ທຸກຄົນ ເຊິ່ງສັງຄົມໄດ້ຮັບຮູ້ ເຖິງການປະກອບສ່ວນຂອງພວກເຮົາ ຕໍ່ ສປປ ລາວ ກໍຄື ປະເທດຊາດຂອງພວກເຮົາ."

ໃນດ້ານຜົນງານດີເດັ່ນໃນລະດັບສາກົນນັ້ນ, LXML ກໍໄດ້ຮັບລາງວັນ "ອາຊຽນ" ດີເດັ່ນດ້ານແຮ່ທາດ ໃນເດືອນທັນວາ 2019 ເຊິ່ງແນໃສ່ຍົກບົດບາດ ແລະ ການຍ້ອງຍໍສັນລະເສີນ ໃຫ້ແກ່ບໍລິສັດຂຸດຄົ້ນ-ປຸງແຕ່ງແຮ່ທາດ ແລະ ໂລຫະ ທີ່ມີຜົນງານດີເດັ່ນໃນການດຳເນີນທຸລະກິດພັດທະນາແຮ່ທາດແບບຍືນຍົງ ແລະ ມີຄວາມຮັບຜິດຊອບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ດີເລີດ.

# 30ປີ ຂອງການປະກອບສ່ວນ ແກ່ການພັດທະນາ ໃນ ສປປ ລາວ



ພວກເຮົາມີຄວາມຍິນດີ ນຳສະເໜີໃຫ້ຊາບວ່າ ຜູ້ອຳນວຍການໃຫຍ່ ຂອງ LXML ທ່ານ ສະໝານ ອະເນກາ ໄດ້ຖືກຮັບການປະດັບ ຫຼຽນໄຊແຮງງານຊັ້ນ I ອະນຸມັດໂດຍປະທານປະເທດແຫ່ງ ສປປ ລາວ. ການຍ້ອງຍໍອັນຊົງກຽດນີ້ ເປັນກຽດ ແລະ ຖືເປັນຄວາມພາກພູມໃຈຍິ່ງ ສຳລັບ ທ່ານ ສະໝານ ແລະ LXML. ການປະດັບຫຼຽນໄຊແຮງງານຊັ້ນ I ໃຫ້ແກ່ທ່ານ ສະໝານ ກໍຍ້ອນທ່ານມີຜົນງານດີເດັ່ນປະກອບສ່ວນເຫື່ອແຮງ, ສະຕິປັນຍາເຂົ້າໃນການຊີ້ນຳ-ນຳພາເຄື່ອນໄຫວວຽກງານ ແລະ ປະກອບສ່ວນຕໍ່ຂະແໜງການທຸລະກິດບໍ່ແຮ່ໃນລາວ; ແລະ ການປະກອບສ່ວນຊ່ວຍເຫຼືອສັງຄົມ ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ (ສຄອຊ) ຕະຫຼອດມາ ເຊິ່ງ ຜົນງານດັ່ງກ່າວ ມີຄວາມສຳຄັນໃນການສ້າງສາ ແລະ ພັດທະນາປະເທດຊາດ ກໍຄື ການພັດທະນາກອບດ້ານກົດໝາຍທີ່ເຂັ້ມແຂງ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການແຂ່ງຂັນ ສຳລັບພາກເອກະຊົນໃນທົ່ວປະເທດ.

ຫຼຽນໄຊແຮງງານຊັ້ນ I ເປັນການຍ້ອງຍໍທີ່ສູງທີ່ສຸດຈາກລັດຖະບານ. ໃນປີ 2020, ທ່ານ ສະໝານ ເປັນໜຶ່ງໃນ 6 ທ່ານເທົ່ານັ້ນ ທີ່ ຖືກຮັບຮູ້ດ້ວຍ ຫຼຽນໄຊແຮງງານຊັ້ນ I.

ຄຽງຄູ່ກັບໜ້າທີ່ຕຳແໜ່ງທີ່ LXML, ທ່ານ ສະໝານ ຍັງໄດ້ຕາງໜ້າໃຫ້ແກ່ບໍລິສັດ ດຳລົງຫຼາຍຕຳແໜ່ງອາວຸໂສທີ່ສຳຄັນ ໃນ ສຄອຊ ມາເປັນເວລາ 10 ປີ ໃນນັ້ນລວມມີ ການເປັນ ອາດີດຮອງປະທານ ສຄອຊ ໄລຍະ 5 ປີ ແລະ ເປັນ ຮອງປະທານທີ່ປຶກສາ ສຄອຊ ນັບຕັ້ງແຕ່ປີ 2015 ເປັນຕົ້ນມາ.

ທ່ານ ສະໝານ ອະເນກາ ມີປະສົບການຫຼາຍກວ່າ 30 ປີ ໃນອຸດສາຫະກຳບໍ່ແຮ່ ພາຍໃນປະເທດ ແລະ ສາກົນ ລວມທັງ ການຄົ້ນພົບບໍ່ຄຳ-ທອງເຊໂປນ ໃນປີ 1989. ທ່ານ ສະໝານ ໄດ້ເກັບກ່ຽວປະສົບການ ຢ່າງກວ້າງຂວາງທາງດ້ານອຸດສາຫະກຳບໍ່ແຮ່ ຢູ່ປະເທດ ອິນໂດເນເຊຍ, ປາປົວນິວກີນີ, ຟິລິບປິນ, ສປ ຈີນ, ໄທ ແລະ ອົດສະຕຣາລີ. ຍ້ອນຄວາມຮູ້-ຄວາມສາມາດປະສົບການລ້ຳໜ້ານີ້, ທ່ານ ສະໝານ ຈຶ່ງໄດ້ປະກອບສ່ວນໃນການຄົ້ນພົບ-ບໍ່ຄຳ-ທອງ ເຊໂປນ ແລະ ການລິເລີ່ມຂອງບໍລິສັດ LXML ແລະ ທັງເປັນຄັງຄວາມຮູ້ດ້ານສະຖາບັນຂອງບໍລິສັດ ກໍຄື ອຸດສາຫະກຳບໍ່ແຮ່ໃນ ສປປ ລາວ ຢ່າງມະຫາສານ. ທ່ານ ສະໝານ ເປັນອະນຸບັນດິດ ດ້ານການສຳຫຼວດທໍລະນີສາດ-ແຮ່ທາດ.

ຈຶ່ງຮ່ວມກັນ ສະແດງຄວາມຊົມເຊີຍທ່ານ ສະໝານ ຢ່າງສຸດໃຈ ທີ່ທ່ານໄດ້ ປະກອບສ່ວນໃສ່ການຂະຫຍາຍຕົວຂອງ LXML, ສຄອຊ ແລະ ການພັດທະນາຂະແໜງການເອກະຊົນ ແລະ ການສ້າງສາພັດທະນາ ສປປ ລາວ.



*ຜູ້ອຳນວຍການໃຫຍ່ LXML ທ່ານ ສະໝານ ອະເນກາ ແລະ ທີ່ປຶກສາອາວຸໂສ ດ້ານການພົວພັນກັບຜູ້ມີສ່ວນຮ່ວມ ທ່ານ ໂອສົດ ອິນສີຊຽງໃໝ່ ຮັບຖ້ວຍລາງວັນພິເສດ ເພື່ອລະນຶກແກ່ການປະກອບສ່ວນໃຫ້ແກ່ LXML ເປັນເວລາ 30 ປີ. ງານສະເຫຼີມສະຫຼອງດັ່ງກ່າວຈັດຂຶ້ນ ລະຫວ່າງງານ ສະເຫຼີມສະຫຼອງ ວັນຊາດ ທີ 2 ທັນວາ 2020, ທີ່ພາກສະໜາມເຊໂປນ.*

# LXML ສະໜັບສະໜູນລັດຖະບານ ໃນວຽກງານຕ້ານ ໂຄວິດ-19

ນັບຕັ້ງແຕ່ COVID-19 ໄດ້ເຂົ້າມາລະບາດໃນ ສປປ ລາວ, LXML ໄດ້ເຮັດວຽກຢ່າງໃກ້ຊິດກັບ ລັດຖະບານລາວ, ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ ເພື່ອຮັບປະກັນໃຫ້ ພະນັກງານ ແລະ ຊຸມຊົນທ້ອງຖິ່ນຂອງພວກເຮົາ ປອດໄພຈາກ COVID-19.

ມາຮອດປັດຈຸບັນໂດຍການຮ່ວມມື ກັບລັດຖະບານລາວ LXML ໄດ້ຊ່ວຍເຫຼືອ US$370,000 ສໍາລັບວຽກງານປ້ອງກັນ, ສະກັດກັ້ນ ແລະ ຮັບມືກັບພະຍາດ COVID-19. ການປະກອບສ່ວນເຫຼົ່ານີ້ຈະຍົກລະດັບຄວາມອາດສາມາດຂອງລັດຖະບານລາວ ໃນການສັກວັກຊີນໃຫ້ແກ່ປະຊາກອນພາຍໃນປະເທດ ແລະ ປະຕິບັດມາດຕະການປ້ອງກັນອື່ນໆຢ່າງມີປະສິດທິຜົນ.

## LXML ສະໜັບສະໜູນ US$100,000 ໃຫ້ລັດຖະບານ ສປປ ລາວ ເພື່ອຈັດຊື້ ວັກຊີນປ້ອງກັນ COVID-19.



ພິທີມອບຮັບ ຈັດຂຶ້ນ ເມື່ອວັນທີ 26 ເມສາ 2021, ຮັບໂດຍ ພະນະທ່ານ ພັນຄໍາ ວິພາວັນ, ນາຍົກລັດຖະມົນຕີ, ມອບໂດຍທ່ານ ພໍ ແຮຣິສ, ຜູ້ຈັດການໃຫຍ່ LXML.

**ທ່ານ ພໍ ແຮຣິສ, ຜູ້ຈັດການໃຫຍ່ LXML** ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈ ໃນການປະກອບສ່ວນຊື້ວັກຊີນ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດ COVID-19. LXML ຍຶດໝັ້ນຕໍ່ມາດຕະການສະກັດກັ້ນ COVID-19 ແລະ ລ໋ອກດາວຂອງລັດຖະບານລາວ ເພື່ອຮັບປະກັນ ຄວາມປອດໄພຂອງພະນັກງານ ແລະ ຊຸມຊົນ."

## LXML ສະໜັບສະໜູນ 116,115,000 ກີບ ໃຫ້ແກ່ ພະແນກສາທາລະນະສຸກ ແຂວງສະຫວັນນະເຂດ




ເພື່ອກໍ່ສ້າງຫ້ອງນໍ້າສໍາລັບຮອງຮັບຄົນມາປິ່ນປົວ COVID-19 ຢູ່ໂຮງໝໍພາກສະໜາມຕັ້ງຢູ່ວິທະຍາໄລ ວິທະຍາສາດ ສຸຂະພາບສະຫວັນນະເຂດ. ພິທີຮັບແມ່ນໄດ້ຈັດຂຶ້ນທີ່ພະແນກສາທາລະນະສຸກແຂວງ ໃນເດືອນ ພຶດສະພາ 2021, ຮັບໂດຍ ດຣ ແສງດາວ ສີດາໄລ, ຫົວໜ້າພະແນກສາທາລະນະສຸກແຂວງ ມອບໂດຍ ທ່ານນາງ ລັດສະນີ ສີສານ, ຫົວໜ້າສາຍງານພົວພັນລັດຖະບານຂອງ LXML.

**ທ່ານ ສະໝານ ອະເນກາ, ອໍານວຍການໃຫຍ່ LXML** ໄດ້ກ່າວວ່າ: "ພວກເຮົາຮັບຮູ້ວ່າ ສຸຂະອະນາໄມ ເປັນມາດຕະການພື້ນຖານສໍາຄັນອັນໜຶ່ງໃນການປ້ອງກັນ COVID-19. ທາງບໍລິສັດຫວັງວ່າການຊ່ວຍເຫຼືອຄັ້ງນີ້ ຈະສະໜອງສະຖານທີ່ອໍານວຍຄວາມສະດວກທີ່ສະອາດສໍາລັບຜູ້ທີ່ໄປຮັບການປິ່ນປົວພະຍາດ COVID-19. LXML ສືບຕໍ່ຮ່ວມມືກັບ ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ ໃນການຮັບມືກັບ ຄື້ນທີສອງຂອງການລະບາດນີ້."

## LXML ຮັບໃບຍ້ອງຍໍ ແລະ ຫຼຽນກາພັດທະນາ



ຈາກ ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ສໍາລັບການປະກອບສ່ວນສະໜັບສະໜູນວຽກງານຂອງ ກະຊວງແຜນການ ແລະ ການລົງທຶນ ລວມທັງ ໃນການຟື້ນຟູເສດຖະກິດຈາກຜົນກະທົບຂອງຄື້ນທີ 1 ຂອງການລະບາດພະຍາດ COVID-19 ໃນ ສປປ ລາວ.

## LXML ບໍລິຈາກ US$15,000 ໃຫ້ແກ່ ແຂວງສະຫວັນນະເຂດ




ເພື່ອຊ່ວຍວຽກງານປ້ອງກັນ ແລະ ຮັບມືກັບ COVID-19, ຮັບໂດຍທ່ານນາງ ຫຼີທອງ ແສງດາວັນ, ຮອງເຈົ້າແຂວງສະຫວັນນະເຂດ, ຫົວໜ້າຄະນະສະເພາະກິດ COVID-19 ຂັ້ນແຂວງ ແລະ ມອບໂດຍ ທ່ານນາງ ລັດສະນີ ສີສານ, ຫົວໜ້າສາຍງານພົວພັນກັບລັດຖະບານ ໃນວັນທີ 8 ມິຖຸນາ 2021.

**ທ່ານ ສະໝານ ອະເນກາ, ອໍານວຍການໃຫຍ່ LXML** ໄດ້ກ່າວວ່າ: "ແຂວງສະຫວັນນະເຂດໄດ້ຕັ້ງໜ້າຮັບມືກັບການສະກັດກັ້ນ ແລະ ຄວບຄຸມຄື້ນທີ 2 ຂອງການລະບາດພະຍາດ COVID-19 ສໍາເລັດຕັ້ງແຕ່ຫົວທີ ຈົນມາຮອດປັດຈຸບັນ ສ່ວນໃຫຍ່ກໍເປັນກໍລະນີນໍາເຂົ້າ-ກໍລະນີແຮງງານເດີນທາງກັບມາປະເທດຢ່າງຖືກກົດໝາຍ. ທາງບໍລິສັດ ພູມໃຈທີ່ ເງິນຊ່ວຍເຫຼືອຂອງພວກເຮົາຈະປະກອບສ່ວນສານຕໍ່ວຽກງານ ກໍຄື ຄວາມພະຍາຍາມຂອງແຂວງ ໃນການຮັກສາໃຫ້ຊຸມຊົນປອດໄພຈາກພະຍາດ COVID-19 ແລະ ໃນຕໍ່ໜ້າຟື້ນຟູເສດຖະກິດທ້ອງຖິ່ນ."

## LXML ບໍລິຈາກ 60,000,000 ກີບ ໃຫ້ແກ່ ໜ່ວຍກູ້ໄພ




ທີ່ນະຄອນຫຼວງວຽງຈັນ ແລະ ສະຫວັນນະເຂດ ໃນເດືອນ ພຶດສະພາ 2021 ເພື່ອສະໜັບສະໜູນຄວາມອາດສາມາດໃນການຮັບມືກັບເຫດສຸກເສີນ. ມູນນິທິຊ່ວຍເຫຼືອຄົນທຸກຍາກແຫ່ງ ສປປ ລາວ (ຫຼື ໜ່ວຍກູ້ໄພ 1623), ສະມາຄົມອາສາກູ້ໄພນະຄອນຫຼວງວຽງຈັນ (ຫຼື ໜ່ວຍກູ້ໄພ 1624) ແລະ ໜ່ວຍກູ້ໄພແຂວງສະຫວັນນະເຂດ ແມ່ນໄດ້ຮັບ 20,000,000 ກີບ ຕໍ່ພາກສ່ວນ ເພື່ອສະໜັບສະໜູນວຽກງານຮັບມືເຫດການສຸກເສີນໃນໄລຍະການລະບາດຂອງພະຍາດ COVID-19 ໃນ ສປປ ລາວ.

**ທ່ານ ສະໝານ ອະເນກາ, ຜູ້ອໍານວຍການໃຫຍ່ LXML** ກ່າວວ່າ: "ໃນໄລຍະວິກິດນີ້ ພວກເຮົາບໍ່ຄວນລືມພະນັກງານປະຈັນບານແນວໜ້າ ກໍຄື ໜ່ວຍກູ້ໄພ. ພວກເຮົາມີຄວາມຍິນດີທີ່ໄດ້ຊ່ວຍບັນດາອາສາສະໝັກເຫຼົ່ານີ້ ຜູ້ທີ່ເຮັດວຽກແນວໜ້າທັງເວັນທັງຄືນ ໃນໄລຍະຫຍຸ້ງຍາກນີ້ ເພື່ອປົກປ້ອງ ຊຸມຊົນຂອງພວກເຮົາຈາກ ພະຍາດ COVID19."

## ເຈົ້າໜ້າທີ່ຂັ້ນເມືອງ ແລະ ແຂວງລົງກວດກາພາກສະໜາມເຊໂປນ ໃນໄລຍະລ໋ອກດາວ.



ໃນເດືອນພຶດສະພາ 2021, ເຈົ້າໜ້າທີ່ຂັ້ນເມືອງ ແລະ ແຂວງ ໄດ້ລົງກວດກາພາກສະໜາມເຊໂປນ, ເພື່ອກວດກາຄວາມສອດຄ່ອງ ກັບ ມາດຕະການປ້ອງການ ແລະ ຄວບຄຸມ COVID-19. ບໍ່ຄໍາ-ທອງເຊໂປນ ໄດ້ເຂົ້າສູ່ພາວະລ໋ອກດາວໃນທ້າຍເດືອນເມສາ 2021, ໂດຍສອດຄ່ອງກັບ ຄໍາສັ່ງຂອງລັດຖະບານໃນການຄວບຄຸມຄື້ນທີສອງຂອງການລະບາດພະຍາດ COVID-19.

ຄະນະຜູ້ແທນ ນໍາພາໂດຍ ເຈົ້າເມືອງວິລະບູລີ ທ່ານ ຄໍາຜຸຍ ສີບຸນເຮືອງ ແລະ ຜູ້ຕາງໜ້າຈາກຄະນະສະເພາະກິດ COVID-19 ແຂວງສະຫວັນນະເຂດ ໄດ້ລົງກວດກາ ພື້ນທີ່ຈໍາກັດບໍລິເວນ, ຄລີນິກ, ຫ້ອງອາຫານ ແລະ ພື້ນທີ່ເຮັດວຽກອື່ນໆ. ຄະນະຜູ້ແທນໄດ້ມີໂອກາດສັງເກດ ມາດຕະການຮັກສາໄລຍະຫ່າງ ແລະ ການຮັກສາສຸຂະອະນາໄມ ລວມທັງຈຸດລ້າງມື, ບ່ອນເປີດປະຕູໂດຍບໍ່ໃຊ້ມື, ການໝາຍເຂດທີ່ຊັດເຈນ ແລະ ການໃສ່ຜ້າປິດປາກ-ດັງຢ່າງເປັນເອກະພາບ ຂອງພະນັກງານ ແລະ ຜູ້ຮັບເໝົາທຸກຖ້ວນໜ້າ.

# LXML ແລະ ກະຊວງປ້ອງກັນປະເທດ ເຊັນສັນຍາຮ່ວມກັນ 2 ສະບັບ

## ຮ່ວມມື ເກັບກູ້ລະເບີດບໍ່ທັນແຕກ ທີ່ປອດໄພ

**26 ກຸມພາ 2021** - ທີ່ບໍ່ຄຳ-ທອງເຊໂປນ ວຽກງານເກັບກູ້ UXO ເປັນວຽກງານໜຶ່ງທີ່ສຳຄັນໃນວົງຈອນການຂຸດຄົ້ນ-ປຸງແຕ່ງ-ຜະລິດບໍ່ແຮ່. ສປປ ລາວ ເປັນປະເທດທີ່ຖືກຖິ້ມລະເບີດຕໍ່ຫົວຄົນທີ່ໜັກໜ່ວງທີ່ສຸດໃນໂລກ ແລະ ບໍ່ຄຳ-ທອງເຊໂປນກໍຕັ້ງຢູ່ບ່ອນໜຶ່ງທີ່ຖືກຖິ້ມລະເບີດລົງໃສ່ຫຼາຍທີ່ສຸດໃນປະເທດ.

LXML ໄດ້ລົງນາມ ບົດບັນທຶກຄວາມເຂົ້າໃຈ (MoU) ກັບ ກະຊວງປ້ອງກັນປະເທດ. ການຮ່ວມມືທີ່ຍາວນານນີ້ ແມ່ນສະໜັບສະໜູນການເກັບກູ້ລະເບີດທີ່ບໍ່ທັນແຕກຕົກຄ້າງຢູ່ເຂດບໍ່ຄຳ-ທອງ ເຊໂປນ ແລະ ຍົກລະດັບຄວາມອາດສາມາດດ້ານວິຊາການກວດກູ້ຂອງກະຊວງປ້ອງກັນປະເທດ ສຳລັບ ຜົນປະໂຫຍດຂອງລູກຫຼານຄົນລຸ່ນໃໝ່ໃນອານາຄົດຂອງ ສປປ ລາວ.

ໃຫ້ກຽດລົງນາມໃນບົດບັນທຶກຄວາມເຂົ້າໃຈຄັ້ງນີ້ມີ: ທ່ານ ພົ.ອ ວຽງໄຊ ໄຊສະໜອນ, ຫົວໜ້າກົມຊ່າງແສງ ກົມໃຫຍ່ເສນາທິການກະຊວງປ້ອງກັນປະເທດ ແລະ ທ່ານ ຊີວລິນ ຊາງ, ຜູ້ຈັດການພະແນກບໍລິການເຕັກນິກບໍ່ແຮ່ ຂອງ LXML ໂດຍການເປັນສັກຂີພິຍານຂອງທ່ານ ພົ.ອ ປາດຖະໜາ ບຸກຕິຈັກ, ຮອງຫົວໜ້າຫ້ອງການກົມໃຫຍ່ເສນາທິການກະຊວງປ້ອງກັນປະເທດ ແລະ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML.

LXML, ກະຊວງປ້ອງກັນປະເທດ, ຄະນະກຳມະການຄຸ້ມຄອງແຫ່ງຊາດ (NRA) ແລະ UXO Lao ໄດ້ເຮັດວຽກງານຮ່ວມກັນ ຫຼາຍທົດສະຫວັດເພື່ອປັບປຸງມາດຕະຖານການເກັບກູ້ລະເບີດທີ່ບໍ່ທັນແຕກ.

ໃນປີ 2015, LXML ແລະ ຄະນະກຳມະການຄຸ້ມຄອງແຫ່ງຊາດ ໄດ້ຮ່ວມກັນສ້າງຫຼັກສູດຝຶກອົບຮົມກ່ຽວກັບການທຳລາຍ UXO ເພື່ອສ້າງຄວາມອາດສາມາດໃຫ້ແກ່ນັກວິຊາການລາວ ໃຫ້ໄດ້ຮັບຄຸນວຸທິ ສູງທີ່ສຸດເປັນທີ່ຍອມຮັບໃນລະດັບສາກົນ. ນັບຕັ້ງແຕ່ປີ 1996, LXML ໄດ້ລົງທຶນຫຼາຍກວ່າ US$51 ລ້ານ, ໄດ້ເກັບກູ້ UXO ໃນເນື້ອທີ່ 5,700 ເຮັກຕາ ແລະ ໄດ້ທຳລາຍ UXO 58,500 ລູກ.

LXML ແລະ NRA ສືບຕໍ່ລົງທຶນໃສ່ ເຕັກໂນໂລຊີທັນສະໄໝເພື່ອປັບປຸງປະສິດທິຜົນການລະບຸ ແລະ ກວດຄົ້ນ UXO. ຕົວຢ່າງ, ລະບົບການກວດຫາລູກລະເບີດທີ່ບໍ່ທັນແຕກໃນລະດັບເລິກ "Ultra-TEM II" ສາມາດຈັບສັນຍານລູກລະເບີດບໍ່ທັນແຕກໃນລະດັບເລິກເຖິງ 3.5 ແມັດ. LXML ໄດ້ສືບຕໍ່ປັບປຸງວິທີການກວດຄົ້ນລະເບີດແບບ Fixed Loop Electromagnetic (FLEM) ແລະ ໃນບໍ່ດົນມານີ້ ໄດ້ລົງທຶນໃສ່ ອຸປະກອນກວດຄົ້ນແບບໃຊ້ມືຈັບດ້ວຍການຊື້ອຸປະກອນກວດຄົ້ນ Vallon VMX-10.



**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML** ກ່າວວ່າ: "ພວກເຮົາສືບຕໍ່ຫລຸດຜ່ອນອຸປະສັກທີ່ມີຜົນກະທົບຖ່ວງດຶງ ການພັດທະນາຂອງ ສປປ ລາວ. ພວກເຮົາສູ້ຊົນເຮັດໃຫ້ຊຸມຊົນປອດໄພດ້ວຍການຍົກລະດັບຄວາມອາດສາມາດ, ດ້ວຍການລົງທຶນໃນອຸປະກອນ ແລະ ເຜີຍແຜ່ຄວາມຮູ້ກ່ຽວກັບ UXO ໃຫ້ແກ່ ຄູ່ຮ່ວມງານ ແລະ ຊຸມຊົນຂອງພວກເຮົາ. LXML ມີຄວາມຮູ້ບຸນຄຸນຢ່າງຍິ່ງ ສຳລັບການຮ່ວມຢ່າງຕໍ່ເນື່ອງກັບ ກະຊວງປ້ອງກັນປະເທດ, ຄະນະກຳມະການຄຸ້ມຄອງແຫ່ງຊາດ ແລະ UXO Lao ໃນກິດຈະກຳທີ່ ອັນຕະລາຍນີ້."

## ຮ່ວມມື ຈັດການກັບ ທາດລະເບີດ ອຸດສາຫະກຳ ທີ່ປອດໄພ



**12 ກຸມພາ 2021** - LXML ໄດ້ສານຕໍ່ ການຮ່ວມມືທີ່ມີມາຍາວນານ ກັບ ກົມອຸດສາຫະກຳປ້ອງກັນປະເທດ, ກະຊວງປ້ອງກັນຊາດ ເພື່ອຮັບປະກັນ ການນຳເຂົ້າ, ຜະລິດ ແລະ ຂົນສົ່ງ ວັດຖຸທາດເຄມີ, ອຸປະກອນ ແລະ ທາດລະເບີດອຸດສາຫະກຳ ຢ່າງປອດໄພ.

ໂຄງການ ເຊໂປນ ນຳໃຊ້ທາດລະເບີດໃນ ຂະບວນການລະເບີດຫີນ ເພື່ອໃຫ້ເຮົາສາມາດຂຸດຄົ້ນແຮ່ຄຳ ແລະ ແຮ່ທອງ.

ປີກາຍ, ພວກເຮົາບັນລຸສະຖິຕິໃໝ່ ໃນການຂຸດຄົ້ນແຮ່ໄດ້ 32 ລ້ານໂຕນ ແລະ ຜະລິດຄຳໄດ້ 2 ໂຕນກວ່າ. ໃນປີນີ້, ເປົ້າໝາຍການຜະລິດຄຳຂອງພວກເຮົາແມ່ນໃຫ້ໄດ້ 8 ໂຕນ. ອັນນີ້ ໝາຍຄວາມວ່າ ພວກເຮົາຕ້ອງ ຂຸດຄົ້ນຫຼາຍຂື້ນ ແລະ ການລະເບີດຫີນ ກໍເປັນສ່ວນໜຶ່ງທີ່ສຳຄັນຂອງຂະບວນການນີ້.

ທ່ານພັນເອກ ນິກອນ ແກ້ວພັນໄຕ, ຫົວໜ້າກົມອຸດສາຫະກຳປ້ອງກັນປະເທດ, ກະຊວງປ້ອງກັນປະເທດ *(ຊ້າຍ)* ແລະ ທ່ານ ຈັນທອນ ເມົາວະລາດ, ຫົວໜ້າສາຍງານພົວພັນກັບລັດຖະບານ, LXML *(ຂວາ)* ໄດ້ໃຫ້ກຽດເຊັນສັນຍາ 3 ປີ ເຊິ່ງສານຕໍ່ການຮ່ວມມື 2 ທົດສະວັດຜ່ານມາ ລະຫວ່າງ LXML ແລະ ກະຊວງປ້ອງກັນປະເທດ.

# LXML ມອບອາກອນກຳໄລ ປີ 2020 ໃຫ້ແກ່ ລັດຖະບານ ລາວ

**7 ເມສາ 2021** - LXML ໄດ້ມອບແຊັກເງິນອາກອນກຳໄລຂອງປີ 2020 ຈຳນວນ US$17.229.742 ໃຫ້ແກ່ທ່ານ ທຳມະລົດ ຣາຊາພົນ, ຮອງຫົວໜ້າກົມສ່ວຍສາອາກອນ, ກະຊວງການເງິນ. ໃນປີ 2020, LXML ໄດ້ມອບຫຼາຍກວ່າ US$32 ລ້ານ ໃຫ້ແກ່ພາກລັດ ເປັນຄ່າຊັບພະຍາກອນແຮ່ທາດ ແລະ ອາກອນກຳໄລ. ໃນປີ 2020, ບໍລິສັດ LXML ຜະລິດຄຳໄດ້ກວ່າ 2 ໂຕນ. ຕັ້ງແຕ່ເລີ່ມດຳເນີນການຂຸດຄົ້ນ-ຜະລິດຄຳ-ທອງໃນປີ 2003, LXML ໄດ້ມອບລາຍຮັບໂດຍກົງຫຼາຍກວ່າ US$1,5 ຕື້ ໃຫ້ແກ່ ສປປ ລາວ ເປັນຄ່າຊັບພະຍາກອນແຮ່ທາດ, ອາກອນ ແລະ ເງິນປັນຜົນ. ການປະກອບສ່ວນໂດຍກົງເຫຼົ່ານີ້ ຈະສືບຕໍ່ສະໜັບສະໜູນການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງລັດຖະບານ.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ "LXML ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ. ນອກຈາກ ການປະກອບສ່ວນເປັນລາຍຮັບໂດຍກົງຕໍ່ລັດຖະບານແລ້ວ, LXML ຍັງໄດ້ປະກອບສ່ວນຫຼາຍຮ້ອຍລ້ານໂດລາສະຫະລັດ ໂດຍຜ່ານການສ້າງວຽກເຮັດງານທຳ ແລະ ການຝຶກອົບຮົມ, ການພັດທະນາພື້ນຖານໂຄງລ່າງ, ການພັດທະນາທຸລະກິດທ້ອງຖິ່ນກໍຄືການພັດທະນາຊຸມຊົນ."




*ທ່ານ ທຳມະລົດ ຣາຊາພົນ, ຮອງຫົວໜ້າກົມສ່ວຍສາອາກອນ, ກະຊວງການເງິນ (ຂວາ) ຮັບແຊັກເງິນອາກອນກຳໄລປີ 2020 ຈາກ ຜູ້ອຳນວຍການໃຫຍ່ LXML ທ່ານ ສະໝານ ອະເນກາ (ຊ້າຍ).*

ທ່ານໄດ້ກ່າວຕື່ມວ່າ "LXML ມຸ່ງໝັ້ນ ປະຕິບັດຕາມມາດຕະຖານສາກົນດ້ານຄວາມປອດໄພ, ມາດຕະຖານດ້ານສິ່ງແວດລ້ອມ ແລະ ການເຄົາລົບປະເທດ ກໍຄື ຊຸມຊົນເຈົ້າພາບ. ມາດຕະຖານດ້ານສັງຄົມ ແລະ ສິ່ງແວດລ້ອມ ຂອງ LXML ໄດ້ຖືກຍົກເປັນແບບຢ່າງດີທີ່ໃຫ້ແກ່ໂຄງການອື່ນ. ນອກຈາກນັ້ນ LXML ເປັນບໍລິສັດໜຶ່ງດຽວເທົ່ານັ້ນ ໃນ ສປປ ລາວ ທີ່ໄດ້ຮັບໃບຍ້ອງຍໍປະເພດ A+ ຈາກ ກະຊວງພະລັງງານ ແລະ ບໍ່ແຮ່ ສະເໝີມາ."

ໂຄງການຄຳ-ທອງ ເຊໂປນ ໄດ້ສ້າງວຽກເຮັດງານທຳໃຫ້ຄົນລາວຫຼາຍພັນຄົນ ແລະ ໄດ້ລົງທຶນຫຼາຍຮ້ອຍລ້ານໂດລາສະຫະລັດ ເຂົ້າໃສ່ການພັດທະນາ ແລະ ການຝຶກອົບຮົມ. ໃນຊຸມຊົນເມືອງວິລະບູລີ ໄດ້ມີປະຊາຊົນກວ່າ 40.000 ຄົນ ໄດ້ຮັບຜົນປະໂຫຍດຈາກ ໂຄງການພັດທະນາຊຸມຊົນ ຂອງໂຄງການຄຳ-ທອງເຊໂປນ ລວມມູນຄ່າ US$13 ລ້ານ ແລະ ລາຍໄດ້ຂອງກຸ່ມທຸລະກິດທ້ອງຖິ່ນກໍໄດ້ທະວີຄູນຂຶ້ນເປັນ US$37 ລ້ານ.




*29 ມີນາ 2021 – ທ່ານ ພູດົງ ສຸຂະວົງ, ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ, ກະຊວງການເງິນ (ຂວາ) ໄດ້ຮັບຄ່າຊັບພະຍາກອນແຮ່ທາດຈາກ ການຜະລິດ-ຈຳໜ່າຍຄຳ ແລະ ທອງຂອງໄຕມາດທີ 4 ປີ 2020 ຈຳນວນ US$3.438.220,28 ຈາກ ທ່ານ ພໍ ແຮຣິສ, ຜູ້ຈັດການໃຫຍ່ LXML (ຊ້າຍ). ມາຮອດປັດຈຸບັນ, LXML ໄດ້ຈ່າຍຄ່າຊັບພະຍາກອນແຮ່ທາດໃຫ້ແກ່ ລັດຖະບານລາວ ລວມທັງໝົດ US$172 ລ້ານ.*

# LXML ສືບຕໍ່ ສະໜັບສະໜູນ ສຄອຊ 80 ລ້ານກີບ

**2 ມັງກອນ 2021** - LXML ໄດ້ສະໜັບສະໜູນ 80 ລ້ານກີບ ເຂົ້າໃສ່ກິດຈະກຳຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (ສຄອຊ). ບໍລິສັດ ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນນາມສະມາຊິກຂອງ ສຄອຊ ເພື່ອສະໜັບສະໜູນ ຂະແໜງການເອກະຊົນໃນ ສປປ ລາວ ມາໄດ້ຫຼາຍກວ່າ 8 ປີ.

LXML ຮັບຮູ້ ວຽກງານອັນສຳຄັນຂອງ ສຄອຊ ໃນການສະໜັບສະໜູນທຸລະກິດລາວ ໃຫ້ຜ່ານຜ່າ ວິກິດການ COVID-19 ໃນໂລກ.

**ທ່ານ ຈັນທອນ ເນົາວະລາດ, ຫົວໜ້າສາຍງານພົວພັນກັບລັດຖະບານ** ໄດ້ກ່າວວ່າ: "ການປະກອບສ່ວນຂອງ LXML ຕໍ່ ຂະແໜງການເອກະຊົນ ສະແດງໃຫ້ເຫັນວ່າ 'ການຂຸດຄົ້ນບໍ່ແຮ່ຢ່າງດີເລີດ ສ້າງຄວາມອຸດົມຮັ່ງມີໃຫ້ແກ່ທຸກຄົນ'. ພວກເຮົາເຮັດວຽກຮ່ວມກັນເພື່ອເປັນແບບຢ່າງທີ່ດີ ແລະ ດຶງດູດນັກລົງທຶນຕ່າງປະເທດ ກໍຄື ບໍລິສັດພາຍໃນໃຫ້ສະໜັບສະໜູນ ສຄອຊ, ວິສະຫະກິດຂະໜາດນ້ອຍ-ກາງ ແລະ ຂະແໜງການເອກະຊົນໂດຍລວມ ໃນ ສປປ ລາວ."




*ທ່ານ ຈັນທອນ ເນົາວະລາດ, ຫົວໜ້າສາຍງານດ້ານການພົວພັນລັດຖະບານ (ຊ້າຍ) ມອບ ການສະໜັບສະໜູນ ກິດຕິມະສັກໃຫ້ທ່ານ ດາວວອນ ພະຈັນທະວົງ, ປະທານ ກິດຕະມະສັກ ສຄອຊ (ຂວາ).*

ສຄອຊ ຖືກສ້າງຕັ້ງຂຶ້ນໃນປີ 1989 ເປັນ ອົງການເອກະລາດເພື່ອສັງຄົມ ທີ່ຕາງໜ້າໃຫ້ ຫົວໜ່ວຍທຸລະກິດໃນ ສປປ ລາວ. ສຄອຊ ມີສະມາຊິກ ກວ່າ 4.000 ຄົນ ຈາກຫຼາກຫຼາຍພາກສ່ວນເອກະຊົນ, ທຸລະກິດນ້ອຍ-ກາງ ແລະ ອຸດສາຫະກຳ ໃນ ສປປ ລາວ ໂດຍມີເປົ້າໝາຍ 'ເພື່ອຍົກລະດັບຄວາມອາດສາມາດຂອງຫົວໜ່ວຍທຸລະກິດ ເພື່ອການສ້າງສາພັດທະນາປະເທດຊາດ.'

# ຄົ້ນພົບ ວັດຖຸບູຮານອາຍຸເກົ່າແກ່ 6 000 ປີ ໃກ້ບໍ່ຄຳ ເຊໂປນ

ໃນບໍ່ດົນມານີ້, ພວກເຮົາໄດ້ຄົ້ນພົບວັດຖຸບູຮານອາຍຸເກົ່າແກ່ 6.000 ປີ ຢູ່ບ້ານນ້ຳປາເຄນ. ວັດຖຸບູຮານເຫຼົ່ານີ້ປະກອບດ້ວຍເຄື່ອງມື ແລະ ຂວານຍຸກຫີນຂັດ ເຊິ່ງເປັນຍຸກທີ່ ສັງຄົມມະນຸດໄດ້ເລີ່ມຜະລິດເຄື່ອງມືແທດເໝາະກັບຄວາມຕ້ອງການໃນຊີວິດປະຈຳວັນ ແລະ ວຽກງານກະສິກຳກ່ອນທີ່ກ້າວເຂົ້າສູ່ຍຸກໂລຫະ ກໍຄື ຍຸກການຮູ້ຄົ້ນພົບ ແລະ ນຳໃຊ້ແຮ່ທາດ ແລະ ການຄ້າຂາຍໃນພາກພື້ນ.



ການຄົ້ນພົບໃໝ່ເຫຼົ່ານີ້ ແມ່ນສານຕໍ່ຈາກການຮ່ວມມືມາໄດ້ 2 ທົດສະວັດ ລະຫວ່າງ LXML, ກົມມໍລະດົກຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລ ເຈມສ໌ ຄຸກ ຂອງ ອົດສະຕຣາລີ. ການຮ່ວມມືດັ່ງກ່າວ ແມ່ນການສະໜັບສະໜູນວຽກງານພາກສະໜາມທີ່ເປັນການເຕົ້າໂຮມການຮ່ວມມືທີ່ມີລັກສະນະພິເສດໃນລະດັບ ຊຸມຊົນທ້ອງຖິ່ນ, ປະເທດ ແລະ ສາກົນ. ອາສາສະໝັກ ຈາກ ນະຄອນຫຼວງວຽງຈັນ, ປະຊາຊົນທ້ອງຖິ່ນ, ນັກສຶກສາຈາກ ອົດສະຕຣາລີ ແລະ ນັກສຶກສາລາວ, ນັກບູຮານຄະດີ ແລະ ເຈົ້າໜ້າທີ່ຈາກ ກົມມໍລະດົກ ທີ່ມາປະຈຳຢູ່ ບໍ່ຄຳ-ທອງ ເຊໂປນ ໄດ້ຮ່ວມມືກັນຢ່າງໃກ້ຊິດ ໃນວຽກງານຄົ້ນຄວ້າຕ່າງໆ.

ການຄົ້ນພົບໃໝ່ຄັ້ງນີ້ ແມ່ນຜົນຂອງວຽກງານພາກສະໜາມ ລະຫວ່າງ ວັນທີ 9 ຫາ 25 ມັງກອນ 2021 ແລະ ທັງເປັນວາລະໜຶ່ງຂອງ ການລົງພາກສະໜາມ 4 ຄັ້ງ ຕໍ່ ປີ, ພາຍໃຕ້ການຮ່ວມທີ່ດັ່ງກ່າວນັ້ນ.

ນັບຕັ້ງແຕ່ປີ 2008 ເປັນຕົ້ນມາ, ບໍລິສັດ LXML ໄດ້ລົງທຶນຫຼາຍກວ່າ US$1,5 ລ້ານ ເຂົ້າໃນການສະໜັບສະໜູນ ການອະນຸລັກປະຫວັດສາດລາວ ແລະ ມໍລະດົກທາງວັດທະນະທຳ ສຳລັບຄົນຮຸ່ນຕໍ່ໄປ.

ໃນໄລຍະຜ່ານມາ ແມ່ນໄດ້ມີການຄົ້ນພົບວັດຖຸບູຮານສຳຄັນຫຼາຍອັນຢູ່ ບໍ່ຄຳ-ທອງເຊໂປນ. ພວກເຮົາເຊື່ອວ່າ ການຂຸດຄົ້ນ-ປຸງແຕ່ງແຮ່ບູຮານໃນຂົງເຂດບໍ່ຄຳ-ທອງເຊໂປນນີ້ໄດ້ສືບຕໍ່ມາເຖິງປະມານ 1.300 ປີກ່ອນ (ປະມານ ຄ.ສ 700) ເຊິ່ງ ເປັນໄລຍະທີ່ຜູ້ຄົນໄດ້ຂຸດຄົ້ນແຮ່ທອງທີ່ອຸດົມສົມບູນຢູ່ເຂດທີ່ຮູ້ກັນວ່າ 'ເປີ້ນເບົ້າຫຼໍ່' ແລະ 'ທົ່ງນາເງືອກ' ແລ້ວໄດ້ນຳໄປປຸງແຕ່ງ ແລະ ແລກປ່ຽນ. ການສັນນິຖານນີ້ ແມ່ນມາຈາກ ກາກບອນທີ່ພົບໃນຝາກະແຕະໄມ້ໄຜ່ຈາກຂຸມບໍ່ແຮ່ບູຮານໃນຕະກອນຕົມທີ່ຢູ່ເລິກໄປຈາກໜ້າດິນລະຫວ່າງ 10 ຫາ 40 ແມັດ.

ການຂຸດຄົ້ນບໍ່ແຮ່ ເປັນປັດໃຈສຳຄັນໃນການພັດທະນາພົນລະເມືອງ ແລະ ສັງຄົມ ມາແຕ່ປະຫວັດສາດ. ການຂຸດຄົ້ນ ຍັງຈະດຳເນີນຕໍ່ໄປ ແລະ ພວກເຮົາຫວັງວ່າ ຈະໄດ້ເຜີຍແຜ່ການຄົ້ນພົບອັນໜ້າຕື່ນເຕັ້ນກວ່າເກົ່າ ກ່ຽວກັບວັດທະນະທຳ ແລະ ປະຫວັດສາດລາວ.

# LXML ຄົ້ນພົບວັດຖຸບູຮານອາຍູເກົ່າແກ່ກວ່າ 2000 ປີ ຢູ່ບໍ່ຄຳ-ທອງ ເຊໂປນ



**ກໍລະກົດ 2021** - LXML ໄດ້ຄົ້ນພົບວັດຖຸບູຮານຈຳນວນໜຶ່ງທີ່ມີອາຍຸເກົ່າແກ່ 2.000 ປີພາຍໃນຂົງເຂດຂອງບໍ່ຄຳ-ທອງເຊໂປນ. ວັດຖຸບູຮານທີ່ຄົ້ນພົບລວມມີ ຂວານເຫຼັກ ແລະ ໄຫຂະໜາດໃຫຍ່ທີ່ໃຊ້ເຂົ້າໃນພິທີກຳການຝັງສົບຄັ້ງທີ 2 ໃນໄລຍະທ້າຍຍຸກທອງຕົ້ນຍຸກເຫຼັກ.

ໃນປີ 2008 ກໍໄດ້ຄົ້ນພົບໄຫທີ່ຄ້າຍຄືໄຫຂະໜາດໃຫຍ່ດັ່ງກ່າວ ຢູ່ເຂດທົ່ງນາເງືອກ ເຊິ່ງ ໄດ້ຖືກສະເໜີເປັນ ສະຖານທີ່ມໍລະດົກຂອງແຂວງສະຫວັນນະເຂດ.

ນອກຈາກນັ້ນ, ທີມງານບູຮານວິທະຍາ ຂອງ LXML ຍັງໄດ້ຄົ້ນພົບໄຫເນື້ອແຂງເຊິ່ງໃນໃຫມີຂວານເຫຼັກ, ປອກແຂນທອງ ແລະ ໝາກປັດທີ່ເຮັດດ້ວຍເປືອກຫອຍ ແລະ ກ້າງປາ ທີ່ມີອາຍຸປະມານໄລຍະສະຕະວັດທີ 12; ພ້ອມເຄື່ອງມືທັນສະໄໝທີ່ສັນນິຖານໃນເບື້ອງຕົ້ນວ່າ ມາຈາກສະໄໝລ້ານຊ້າງ ລະຫວ່າງ ສະຕະວັດທີ 17 ເຖິງ 19.

## ລາວ "ສູ້ສູ້" ຕ້ານໂຄວິດ-19

**ໂດຍ: ສ. ອະເນກາ**

ຈິງທີ່!!
ຊາດໃດບໍ່ຕໍ່ສູ້!!
ນອນນັ່ງ ດູດງວດາຍ!
ໝາ-ແມວ! ຫວງແຫນໄວ້!
ໝາ ເປັນຄົນແປກໜ້າ
ພອຍແຕ່-ຊີຈິບຫາຍ (ແທ້ດາຍ!)
ກໍເທົ່າຕົນຕາຍແລ້ວ!
ເຮືອນຮັງ ບ່ອນມັນຢູ່!
ພະລັນເຕັ້ນ-ເທົ່າຫອນ!

ເປັດ- ໄກ່ລ້ຽງ!!
ຈອນພອນ-ແຫຼວ ຊອມລັກ
ເກີດເປັນຄົນ-ຄວນ
ເກີດໂຣຄາ-ພະຍາດຮ້າຍ!
ລູກອ່ອນ-ຊອນໂຕ!!
ແມ່ມັນພະລັນສູ້!
ສັກສີຂອງປະເທດ!
ກໍໂຮມສູ້-ຊ່ວຍກັນ!!

ໂລກ! ເຮັ່ງຮ້ອນ!
ຄວນທີ່! ຄົນລາວ-ຮັກ!
ໂຮມແຮງກາຍ- ໃຈພ້ອມ!
ຊ່ວຍກັນ ຕ້ານພະຍາດຮ້າຍ!
ລຸມລະບາດ- ໄພພິບັດ!
ເຜົ່າພັນ-ພົງເຊື້ອ!!!
ສາມັກຄີ-ຮັກທໍ່!!!
ໃຫ້ໜີເວັ້ນຫຼີກໄກ

ໜຶ່ງນັ້ນ!
ຢ່າໄດ້! ເກເລເວົ້າ!!
ວ່າຜູ່ນັ້ນ-ດ່າຜູ່ນີ້!!
ຢ່າໄດ້! ຫຼົບ-ຫຼີກລີ້!
ເອົາແຕ່ຕາມໃຈຕົນ!
ກະທຳທາງບໍ່ເຂົ້າທ່າ!
ຜູ່ດີໄດ້ ແມ່ນແຕ່ໂຕ!
ໜີພ່າຍ-ເຂົ້າມາລາວ
ບໍ່ຮ່ວມໂຮມ-ແຮງສູ້!!!

ດີທໍ່:
ຂໍຜ່ານເຂົ້າ
ພັກ-ລັດ ຊົມເຊີຍດອມ!
ແມ່ນແຕ່ເປັນເຈັບໄຂ້!
ເພິ່ນກໍຍັງ ຊ່ວຍເຈົ້າ!
ຕາມດ່ານສາກົນ!
ຊ່ວຍຕົວຕົນເຈົ້າ!
ໂຄວິດ-ຕິດພະຍາດ!
ປົວໃຫ້-ຢູ່ສະເໝີ!

ສະນັ້ນ!
ຢ່າໄດ້ລັກລອບເຂົ້າ
ມັນຊິຜິດກົດໝາຍ!
ຊິອັບອາຍ-ຂາຍໜ້າ!
ຄັນວ່າ ຕິດພະຍາດຮ້າຍ
ປາຍດ່ານ-ຊາຍເຂົາ! (ແທ້ແລ)
ເພິ່ນຈ່ອງຈຳ-ຕົນເຈົ້າ!!
ເພາະທຳທີ-ທາງບໍ່ແມ່ນ!
ຊິຢາຍໃຫ້-ພໍ່ແມ່ຕົນ!(ຕື່ມແລ)

ອີກໜຶ່ງ!
ຄັນທ່ານ ເປັນເຈັບໄຂ້!
ກໍໃຫ້ບອກ-ກ່າວແຈ້ງ
ລັກປິດບັງ-ອຳພາງ!
ຊິຕິດໄກ-ໄປໜ້າ
ສົງສັຍຕົນ-ຕິດພະຍາດ!
ລາຍງານພ້ອມ-ດ່ວນພະລັນ!
ຍິ່ງຊິມີ-ຜົນຮ້າຍ!
ກະຈາຍໄປ-ໃສ່ຜູ່ອື່ນ!

((ແກ້ບ່ອນນັ້ນ! ຍັງບ່ອນນີ້ ບໍ່ມີມື້ ວ່າຊິຫາຍ ທ່ານ ເອີຍ.....))

# ສຳພາດເຈາະເລິກ ແລະ ສ່ວນຕົວ ກັບ ຄາຣ ເບເກົ້ ດູລີ້, ຮອງຜູ້ຈັດການໃຫຍ່ ຝ່າຍການດຳເນີນງານ



ໃນສະບັບນີ້ ພວກເຮົານຳສະເໜີ ທ່ານ ຄາຣ ເບເກົ້ ດູລີ້ ທີ່ໄດ້ເລີ່ມມາຮ່ວມເຮັດວຽກນຳ LXML ເປັນ ຮອງຜູ້ຈັດການໃຫຍ່ ຝ່າຍການດຳເນີນງານ ຕັ້ງແຕ່ ເດືອນ ກັນຍາ 2020 ເປັນຕົ້ນມາ. ທ່ານ ຄາຣ ມີປະສົບການດ້ານການດຳເນີນງານຫຼາຍກວ່າ 30 ປີ ໃນຫຼາຍໆປະເພດແຮ່ທາດ ແລະ ໂລຫະ ພ້ອມທັງໄດ້ນຳພາໂຄງການຂຸດຄົ້ນບໍ່ແຮ່ແບບເປີດໃຫຍ່ໆຫຼາຍແຫ່ງຢູ່ໃນຫຼາຍພາກພື້ນ. ຄາຣ ຍຶດຖື ການສື່ສານທີ່ດີ, ການເຮັດວຽກເປັນ ທີມ ແລະ ການປັບປຸງຢ່າງຕໍ່ເນື່ອງ ເປັນປັດໃຈສຳຄັນ ໃນການບັນລຸຄວາມສຳເລັດ ແລະ ຄວາມດີເລີດ. ຫຼັກການໜຶ່ງທີ່ສຳຄັນໃນການດຳລົງຊີວິດ ທີ່ພວກເຮົາທຸກຄົນສາມາດເອົາໄປນຳໃຊ້ ແມ່ນ ເລື່ອງ "ເວລາ" ຄື ເຮັດໃຫ້ທຸກໆວິນາທີຂອງຊີວິດມີຄວາມໝາຍ.

**ຊ່ວຍແນະນຳຕົວ ແລະ ປະສົບການຂອງທ່ານ ກ່ອນທີ່ເຂົ້າມາເຮັດວຽກກັບ LXML.**

ຂ້າພະເຈົ້າເປັນຄົນສະວິດ ແຕ່ມາໃຫຍ່ຢູ່ ອາຟຣິກາໃຕ້. ຂ້າພະເຈົ້າຮຽນຈົບວິສະວະກຳການຂຸດຄົ້ນບໍ່ແຮ່ ແລ້ວໄດ້ເຮັດວຽກໃນຫຼາຍປະເທດ ເປັນຕົ້ນຢູ່ ອາຟຣິກາ, ອິນເດຍ, ສະຫະລັດອາເມຣິກາ ແລະ ປາປົວນິວກີນີ ກ່ອນທີ່ໄດ້ມາເຮັດຢູ່ ບໍ່ຄຳ-ທອງເຊໂປນ. ປະສົບການຂອງຂ້າພະເຈົ້າສ່ວນໃຫຍ່ແມ່ນໂຄງການຂຸດຄົ້ນບໍ່ແຮ່ເປີດ ແລະ ການພັດທະນາບໍ່ໃໝ່ ສອງແຫ່ງ.

**ມີສິ່ງທ້າທາຍໃດແດ່ທີ່ທ່ານໄດ້ພົບພໍ້ຕະຫຼອດໄລຍະການເຮັດວຽກ ແລະ ທ່ານ ຜ່ານຜ່າມາໄດ້ແນວ ໃດ?**

ຕະຫຼອດອາຊີບການເຮັດວຽກ ຂ້າພະເຈົ້າໄດ້ແກ້ໄຂສິ່ງທ້າທາຍສຳຄັນຫຼາຍດ້ານນັບແຕ່ເລື່ອງຊ່ອງຫວ່າງດ້ານຄວາມປອດໄພ, ສິ່ງແວດລ້ອມ, ສັງຄົມ, ຄຸນນະພາບຕະຫຼອດຮອດສັກກະຍະພາບການດຳເນີນງານ. ວິທີການຮັບມືແກ້ໄຂແມ່ນຄ້າຍຄືກັນໃນທຸກໆກໍລະນີ ເຊິ່ງ ຮຽກຮ້ອງໃຫ້ ສ້າງຄວາມເຂົ້າໃຈກ່ຽວກັບບັນຫາຜ່ານການວິເຄາະ ແລະ ຮັບຟັງຜູ້ອື່ນ, ການວາງແຜນໂດຍການມີສ່ວນຮ່ວມຂອງທີມງານ, ຮັບປະກັນວ່າມີຊັບພະຍາກອນມາຮອງຮັບແຜນ ແລະ ປະຕິບັດແຜນຜ່ານການປະສານງານທີ່ແໜ້ນແຟ້ນ ແລະ ການສື່ສານທີ່ບໍ່ຂ້ອງຄາ. ສຸດທ້າຍແມ່ນການມີຄວາມພາກພູມຮ່ວມກັນພາຍໃນທີມງານ ເພື່ອປະຕິບັດແຜນໃຫ້ສຳເລັດຜົນ.

**ຫຼັກການສຳຄັນທີ່ທ່ານຍຶດຖືໃນບົດບາດ ຮອງຜູ້ຈັດການໃຫຍ່ ແມ່ນຫຍັງ?**

ການບາດເຈັບເທົ່າສູນແມ່ນເປັນໄປໄດ້, ສຸມໃສ່ສິ່ງທີ່ສຳຄັນ, ມີລະບຽບວິໄນ ແລະ ຄວາມສຳເລັດຈະບັນລຸໄດ້ ກໍ່ຕໍ່ເມື່ອ ມີການເຮັດວຽກເປັນທີມ ແລະ ການສື່ສານທີ່ມີປະສິດທິຜົນ. ສຸດທ້າຍ, ໃຜກໍສາມາດປັບປຸງ-ເຮັດໃຫ້ດີຂຶ້ນກວ່າເກົ່າເລື້ອຍໆ ເຊິ່ງ ເປັນ ເສັ້ນທາງສະແຫວງຫາຄວາມດີເລີດ!

**ໃນວາລະທີ່ທ່ານເປັນຮອງຜູ້ຈັດການໃຫຍ່, ທ່ານຕ້ອງການບັນລຸຫຍັງ ໃນໄລຍະສັ້ນ ແລະ ໄລຍະຍາວ?**

ຂ້າພະເຈົ້າຫວັງວ່າຈະສາມາດປູກຝັງຄວາມຮູ້ສຶກ-ແນວຄິດ ໃນການບັນລຸການປະຕິບັດງານທີ່ມີຄຸນນະພາບຮອບດ້ານ. ການເຮັດໃຫ້ຖືກຕ້ອງຕັ້ງທຳອິດ ແລະ ທຸກຄັ້ງໝາຍວ່າ ບໍ່ມີການສ້າງສິ່ງເສດເຫຼືອ (ການຂາດປະສິດທິພາບ)!

**ທ່ານ ປະທັບໃຈອັນໃດ ກ່ຽວກັບ ບໍ່ຄຳ-ທອງເຊໂປນ ຫຼື ສປປ ລາວ ໃນໄລຍະຫຼາຍເດືອນຜ່ານມາ?**

ການຮຽນຮູ້ ສປປ ລາວ ແລະ ວັດທະນະທຳລາວ ເປັນປະສົບການທີ່ວິເສດຫຼາຍ ແລະ ຍັງມີອີກຫຼາຍຢ່າງໃຫ້ຮຽນໃຫ້ລອງ. ເປັນຫຍັງທີ່ມີຄຸນຄ່າທີ່ສຸດ! ຢູ່ບໍ່ຄຳ-ທອງເຊໂປນ ຂ້າພະເຈົ້າປະທັບໃຈໃນ ລະດັບວັດທະນະທຳດ້ານຄວາມປອດໄພທີ່ສູງ ແລະ ຍຸດທະສາດການເຕີບໂຕແບບບຸກທະລຸເພື່ອໃຫ້ກ້າວມາເປັນ ບໍລິສັດຜະລິດຄຳທີ່ນຳໜ້າ.

**ປັດຊະຍາການເຮັດວຽກ ແລະ ດຳລົງຊີວິດຂອງທ່ານ ແມ່ນຫຍັງ?**

ເຮັດວຽກເຕັມທີ່, ຫຼິ້ນ-ມ່ວນຊື່ນເຕັມທີ່ (ແລະ ຕາມລຳດັບນັ້ນ). ໃຫ້ຖືເອົາເວລາເປັນສິ່ງທີ່ລ້ຳຄ່າຍ້ອນມັນຈຳກັດ. ສະນັ້ນໃຊ້ເວລາໃຫ້ເປັນປະໂຫຍດ!

# ບິນສູງ: ມາພົບກັບ ນັກບິນໂດຣນຂອງ LXML

ໂດຣນທັນສະໄໝທຳອິດຂອງໂລກ – ຫຼື ພາຫະນະທາງອາກາດທີ່ບໍ່ມີຄົນນັ່ງຂັບ – ໄດ້ຖືກສ້າງຂຶ້ນໃນປີ 1935 ເພື່ອຝຶກອົບຮົມນັກບິນ. ຕັ້ງແຕ່ນັ້ນມາ, ໂດຣນ ໄດ້ຖືກນຳໃຊ້ໃນຫຼາກຫຼາຍອຸດສາຫະກຳນັບແຕ່ ການທະຫານ, ກະສິກຳ, ການບັນເທີງ ຕະຫຼອດຮອດ ບໍ່ແຮ່.

ທີ່ LXML, ພວກເຮົານຳໃຊ້ ໂດຣນ ເພື່ອຊ່ວຍໃຫ້ພວກເຮົາບັນລຸເປົ້າໝາຍການຂຸດຄົ້ນບໍ່ແຮ່ ແລະ ທັງຮັກສາຄວາມປອດໄພຂອງພະນັກງານ ກໍຄື ຊຸມຊົນ. ໂດຣນ ເປັນເຄື່ອງມືດີເລີດເພື່ອບັນລຸວຽກງານ ການວາງແຜນການຂຸດຄົ້ນ, ດ້ານການດຳເນີນງານ, ດ້ານສິ່ງແວດລ້ອມ ແລະ ວຽກງານຊຸມຊົນ. ໂດຣນ ຈະໃຫ້ພາບທີ່ກວ້າງໄກ້ຈາກລະດັບສູງທາງອາກາດ ໃຫ້ພວກເຮົາເຫັນ ຮ່ອງຮອຍທີ່ຖືກລົບກວນ ແລະ ຊ່ວຍໃຫ້ພວກເຮົາເຂົ້າເຖິງເຂດຫ່າງໄກສອກຫຼີກ.

LXML ມີພະນັກງານ 24 ຄົນຈາກທີມງານ ຂຸດຄົ້ນບໍ່ແຮ່, ສິ່ງແວດລ້ອມ, ແລະ ພົວພັນກັບຊຸມຊົນ ເຊິ່ງໃນນັ້ນມີແມ່ຍິງ 3 ຄົນ ທີ່ສາມາດບິນໂດຣນເພື່ອຮັບໃຊ້ວຽກງານປະຈຳວັນຂອງພວກເຮົາ.

ການຊີເຈາະ ແລະ ລະເບີດຫີນ ເປັນວຽກງານທີ່ປະຕິບັດເປັນປະຈຳທີ່ບໍ່ຄຳ-ທອງເຊໂປນ ກ່ອນທີ່ພວກເຮົາຈະສາມາດຂຸດຄົ້ນແຮ່ໄດ້. ນັກບິນຂອງພວກເຮົາ ບິນໂດຣນທຸກໆມື້ເພື່ອຮັບປະກັນວ່າ ບຸກຄົນ ແລະ ສັດສາວາສິ່ງຈະບໍ່ຢູ່ພາຍໃນຂອບເຂດຫວງຫ້າມ (ລັດສະໝີ 500ມ) ກ່ອນທີ່ຈະລະເບີດຫີນ. ນອກຈາກນັ້ນ, ພວກເຮົາຍັງນຳໃຊ້ພາບຫຼັງການລະເບີດຫີນເພື່ອ ວິເຄາະ ແລະ ຕິດຕາມຄວາມປອດໄພ ໂດຍສະເພາະ ເວລາລະເບີດຫີນຢູ່ໃກ້ເຂດຊຸມຊົນ.

ໃນກິດຈະກຳການຂຸດຄົ້ນບໍ່ແຮ່, ພວກເຮົານຳໃຊ້ ໂດຣນເພື່ອສຳຫຼວດເນື້ອທີ່, ວາງແຜນບໍ່ທີ່ຈະລະເບີດ, ເກັບກຳຮູບພາບ ຄວາມຄືບໜ້າການຂຸດຄົ້ນ, ປະເມີນການສັນຈອນພາຍໃນເຂດບໍ່ແຮ່ ແລະ ກວດກາສະພາບການດຳເນີນງານ. ໃນວຽກງານການຄຸ້ມຄອງສິ່ງແວດລ້ອມ, ໂດຣນ ຊ່ວຍພວກເຮົາໃນການ ກວດກາວຽກງານຟື້ນຟູຕ່າງໆ ແລະ ກິດຈະກຳການຄຸ້ມຄອງນ້ຳ. ໃນວຽກງານຊຸມຊົນ, ໂດຣນ ສະໜັບສະໜູນວຽກງານການໄກ່ເກ່ຍຄຳຮ້ອງທຸກຂອງຊຸມຊົນ ແລະ ວຽກງານເຂົ້າຫາທີ່ດິນຕ່າງໆ.

ເຮົາມາພົບກັບ ກັບຕັນບິນໂດຣນ ຂອງ LXML ທັງ 3 ທ່ານ ພ້ອມທັກສະຂອງພວກເຂົາ.



**ຈັນທະວີ ອິນທະສຸກ, ວິສະວະກອນ ດ້ານການຊີເຈາະ ແລະ ລະເບີດຫີນ, ຈາກ ນະຄອນຫຼວງ**

ຈັນທະວີ ເປັນແມ່ຍິງຜູ້ດຽວໃນສະມາຊິກ 5 ຄົນຂອງທີມງານຊີເຈາະ ແລະ ລະເບີດຫີນ. ລາວໄດ້ເລີ່ມເຮັດວຽກກັບ LXML ໃນເດືອນ ເມສາ 2020.

"ຂ້າພະເຈົ້າໄດ້ຝຶກບິນໂດຣນ ເປັນເວລາ 1 ອາທິດ ແລະ ບິນມາໄດ້ 1 ປີພໍດີ. ການບິນໂດຣນ ທີ່ທ້າທາຍເປັນພິເສດແມ່ນຕອນບິນໃນລະດູຝົນ, ການບິນຢູ່ເຂດພູສູງ ແລະ ເວລາສັນຍານຕັດ ລະຫວ່າງໂດຣນ ແລະ ເຄື່ອງຄວບຄຸມ!"

# 5 ນາທີ ກັບ ວິເມພາ ວີໄລພອນ, ວິສະວະກອນ ປຸງແຕ່ງແຮ່

ຕອນທີ່ເປັນບັນດິດໃໝ່ ຈົບສາຂາວິສະວະກຳ ຈາກ ປະເທດ ອົດສະຕຣາລີ, ວິເມພາ ໄດ້ວຽກທຳອິດກັບ ລຊມລ ໃນປີ 2019 ເປັນ ວິສະວະກອນປຸງແຕ່ງ. ຢູ່ ລຊມລ, ລາວມັກທີ່ຈະມີສິ່ງທ້າທາຍໃຫ້ຮັບມືໃນແຕ່ລະວັນ ເພື່ອໃຫ້ລາວ ນຳໃຊ້ຄວາມສ້າງສັນ ແລະ ທັກສະການແກ້ໄຂບັນຫາໃນພາກປະຕິບັດຕົວຈິງ. ຄວາມທ້າວທັນຕັ້ງໜ້າເຮັດວຽກ ແລະ ການຈັດວາງບູລິມະສິດວຽກ ເປັນ ກະແຈສຳຄັນແຫ່ງຄວາມສຳເລັດຂອງລາວ. ວິເມພາ ເຊື່ອວ່າທຸກຢ່າງທີ່ເກີດຂຶ້ນແມ່ນມີເຫດຜົນ ກໍຄື ເພື່ອການເຕີບໂຕ ແລະ ເພື່ອໃຫ້ເກັບກ່ຽວ 'ເສັ້ນທາງ-ປະສົບການ' ຫຼາຍກວ່າ 'ຜົນໄດ້ຮັບ' ຍ້ອນວ່າ ນັ້ນແມ່ນບໍ່ເກີດຂອງ 'ການຮຽນຮູ້'.



**ຊ່ວຍແນະນຳຕົວ ແລະ ປະສົບການຂອງທ່ານກ່ອນທີ່ເຂົ້າມາເຮັດວຽກກັບ ລຊມລ.**

ກ່ອນມາເຮັດວຽກກັບ ລຊມລ ໃນປີ 2019, ຂ້ອຍສຶກສາປະລິນຍາຕີສາຂາວິສະວະກຳ (ປຸງແຕ່ງເຄມີ) ຢູ່ ເມືອງ ບຣິສເບິນ, ອົດສະຕຣາລີ. ຂ້າພະເຈົ້າໄດ້ເກັບກ່ຽວປະສົບການຊີວິດໃນໄລຍະທີ່ເຮັດວຽກຢູ່ຕ່າງປະເທດ. ໃນເວລາພັກຮຽນ, ຂ້າພະເຈົ້າກໍໄດ້ເດີນທາງ, ຮ່ວມທັດສະນະສຶກສາແລກປ່ຽນ ແລະ ເຮັດວຽກເພີ່ມທັງພາຍນອກ ແລະ ພາຍໃນມະຫາວິທະຍາໄລ. ກ່ອນໄປສຶກສາຢູ່ອົດສະຕຣາລີ, ຂ້າພະເຈົ້າໄດ້ເຮັດວຽກເປັນຜູ້ຊ່ວຍຄູ ຢູ່ ສະຖາບັນສອນພາສາອັງກິດແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ.

**ທ່ານມັກສິ່ງໃດຫຼາຍທີ່ສຸດໃນໜ້າວຽກຂອງທ່ານ?**

ລຊມລ ເປັນບ່ອນເຮັດວຽກວິຊາຊີບທຳອິດ ທີ່ຂ້າພະເຈົ້າໄດ້ນຳເອົາຄວາມຮູ້ທິດສະດີທີ່ຮຽນມາຈາກມະຫາວິທະຍາໄລ ມາໃຊ້ໃນພາກປະຕິບັດຕົວຈິງ. ຂ້າພະເຈົ້າມັກແກ້ໄຂບັນຫາ ແລະ ບໍ່ມີມື້ໃດທີ່ໜ້າເບື່ອຢູ່ພາກສະໜາມ. ດັ່ງທີ່ພວກເຮົາເຫັນ, ຂອບເຂດໜ້າວຽກໄດ້ຂະຫຍາຍກວ້າງອອກ ໃນຂະນະທີ່ພວກເຮົາຫັນຈາກ ການສຸມໃສ່ຜະລິດທອງ ສູ່ການຜະລິດຄຳ. ຂ້າພະເຈົ້າມັກຫຼາຍທີ່ສຸດເວລາພວກເຮົາເປັນທີມ ສາມາດນຳໃຊ້ຄວາມສ້າງສັນໃນຂະບວນການແກ້ໄຂບັນຫາຢູ່ໂຮງງານ ເຊິ່ງໄດ້ກາຍເປັນສິ່ງທີ່ເຮັດປະຈຳວັນ. ຂ້າພະເຈົ້າມັກວຽກຍ້ອນຂ້າພະເຈົ້າສາມາດແລກປ່ຽນ ແລະ ຮຽນຮູ້ທັກສະຕ່າງໆຈາກເພື່ອນຮ່ວມງານ, ພວກເຮົາຮຽນຈາກກັນ ແລະ ກັນ. ຂ້າພະເຈົ້າເຊື່ອວ່າ ພວກເຮົາຈະພັດທະນາເຕີບຕົວໄດ້ເມື່ອຢູ່ອ້ອມຮອບດ້ວຍບຸກຄົນທີ່ມີປະສົບການສູງ ແລະ ເຖິງແມ່ນວ່າ ພວກເຮົາອາດຕ້ອງເຮັດໃນສິ່ງທີ່ບໍ່ລຶ້ງເຄີຍແຕ່ກໍມ່ວນດີ.

**ທ່ານຈະນຳຫຼັກການພື້ນຖານໃດແດ່ເຂົ້າມາໝູນໃຊ້ໃນໜ້າວຽກຂອງທ່ານເພື່ອຊ່ວຍໃຫ້ ລຊມລ ປະສົບຜົນສຳເລັດ?**

ບາງຫຼັກການພື້ນຖານທີ່ຂ້າພະເຈົ້າຍຶດຖືສະເໝີແມ່ນ ຄວາມທ້າວທັນຕັ້ງໜ້າ ແລະ ການວາງບູລິມະສິດໃນທຸກໆຂົງເຂດໜ້າວຽກ ບໍ່ວ່າຈະດ້ານວິຊາການ, ການສື່ສານ ຫຼື ການວາງແຜນ. ອັນນີ້ຈະຊ່ວຍຂ້າພະເຈົ້າມີຈຸດສຸມ ທີ່ສອດຄ່ອງກັບເປົ້າໝາຍ ໂດຍສະເພາະ ເວລາເຮັດວຽກ ເຊິ່ງ ພວກເຮົາອາດຕ້ອງຈັດການກັບໜ້າວຽກທີ່ລົ້ນມືກໍເປັນໄດ້. ຖ້າເຮົາປະຕິບັດແບບນີ້ຢ່າງສະໝ່ຳສະເໝີ, ຈຸດສຸມຂອງພວກເຮົາກໍຈະກວ້າງອອກ ເຮັດໃຫ້ເສຍຫຼັກ.

**ໃນຖານະທີ່ເປັນແມ່ຍິງທີ່ເຮັດວຽກໃນອຸດສາຫະກຳທີ່ມີຜູ້ຊາຍເປັນສ່ວນໃຫຍ່ ຄື ບໍ່ແຮ່, ທ່ານພົບພໍ້ກັບສິ່ງທ້າທາຍໃດແດ່ ແລະ ຜ່ານຜ່າມັນແນວໃດ?**

ບໍ່ແຮ່ເປັນອຸດສາຫະກຳທີ່ຫຼາກຫຼາຍ ລວມເອົາຫຼາກຫຼາຍຂົງເຂດວຽກງານ, ຄວາມຊຳນານງານ ແລະ ວັດທະນະທຳ. ໃນຂະນະທີ່ພວກເຮົາອາດເຮັດວຽກເພື່ອບັນລຸເປົ້າໝາຍດຽວກັນ, ການສື່ສານອາດເປັນສິ່ງທ້າທາຍຫຼາຍຍ້ອນທຸກຄົນອາດມີຄວາມຄິດແຕກຕ່າງກັນກ່ຽວກັບ "ຄວາມສຳເລັດ". ວິທີການທີ່ດີທີ່ສຸດແມ່ນ ການສື່ສານໃຫ້ເຂົ້າໃຈງ່າຍ ແລະ ສ້າງສັນ ເຊິ່ງ ຮຽກຮ້ອງ ການຮັບຟັງຫຼາຍໆ, ການເກັບກຳຂໍ້ມູນ, ການລະດົມສະໝອງ ແລະ ການປະຕິບັດຕາມແຜນ.

**ທ່ານມີຄວາມເຫັນແນວໃດຕໍ່ກັບຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງພະນັກງານ ໃນ ລຊມລ?**

ໃນຂະນະທີ່ແມ່ຍິງໃນຕຳແໜ່ງວິຊາການນັ້ນ ໜ້ອຍກວ່າຜູ້ຊາຍໃນອຸດສາຫະກຳບໍ່ແຮ່, ຂ້າພະເຈົ້າຫວັງວ່າຈະສາມາດເປັນແຮງຈູງໃຈໃຫ້ແມ່ຍິງອື່ນໆ ຫັນມາເຮັດວຽກໃນ ອຸດສາຫະກຳນີ້. ຖ້າມີຄວາມຕັ້ງໃຈ ແລະ ໂອກາດ, ຂ້າພະເຈົ້າຄິດວ່າທຸກຄົນເຮັດໄດ້. ຂ້າພະເຈົ້າຄິດວ່າ ອຸດສາຫະກຳບໍ່ແຮ່ໃນລາວ ຈະໄດ້ຜົນປະໂຫຍດຫຼາຍ ຈາກການດຶງດູດຄົນໜຸ່ມນ້ອຍທີ່ມີຄວາມສາມາດ - ບໍ່ວ່າ ແມ່ຍິງ ຫຼື ຜູ້ຊາຍ - ໃຫ້ເຂົ້າມາເຮັດວຽກໃນຂະແໜງການນີ້.

**ທ່ານມີຄຳແນະນຳແນວໃດໃຫ້ກັບຜູ້ທີ່ພວມຫາໂອກາດເຂົ້າມາເຮັດວຽກໃນອຸດສາຫະກຳບໍ່ແຮ່, ໂດຍສະເພາະສຳລັບແມ່ຍິງ?**

ຄຳແນະນຳຂອງຂ້າພະເຈົ້າເຖິງທຸກຄົນ ແມ່ນໃຫ້ ປັບຕົວ ແລະ ເປີດໃຈ. ວຽກບໍ່ແຮ່ ມີຫຼາກຫຼາຍໜ້າວຽກ ແລະ ເຕັກໂນໂລຊີກໍກ້າວໜ້າໄປເລື້ອຍໆ ເຊິ່ງຮຽກຮ້ອງໃຫ້ພວກເຮົາ ເຮັດໄດ້ຫຼາຍໜ້າວຽກ ແລະ ບໍລິຫານເວລາຢ່າງດີ. ອຸດສາຫະກຳບໍ່ແຮ່ເປີດໂອກາດໃຫ້ພັດທະນາວິຊາຊີບ. ຂ້າພະເຈົ້າເວົ້າໄດ້ວ່າ ທັກສະ ແລະ ປະສົບການທີ່ໄດ້ຈາກອຸດສາຫະກຳນີ້ ແມ່ນສາມາດຖ່າຍທອດໄປຍັງ ອຸດສາຫະກຳອື່ນໆ ກໍຄື ຊີວິດປະຈຳວັນ.

**ທ່ານມີຄະຕິປະຈຳໃຈແນວໃດ?**

ຂ້າພະເຈົ້າເຊື່ອວ່າ ທຸກສິ່ງທີ່ເກີດກັບເຮົາແມ່ນເພື່ອການເຕີບຕົວຂອງເຮົາເອງ. ພວກເຮົາຮຽນຮູ້ຈາກ ຜົນສຳເລັດ ແລະ ຄວາມລົ້ມເຫຼວ. ອັນທີ່ສຳຄັນໄປກວ່ານັ້ນ ແມ່ນໃຫ້ເຮົາ ຮຽນຮູ້ ແລະ ມ່ວນຊື່ນກັບຂະບວນການ ແທນທີ່ຈະສຸມໃສ່ຜົນຮັບ. ຖ້າເຮັດໄດ້ແນວນັ້ນ, ພວກເຮົາຈະຮຽນຮູ້ໄດ້ຫຼາຍທີ່ສຸດ. ໃນຂະນະທີ່ ການຢຸດສະຫງັກ ແລະ ເສຍຫຼັກນັ້ນອາດເກີດຂຶ້ນງ່າຍ, ການເບິ່ງຄືນຫຼັງເສັ້ນທາງຈາກຕົ້ນເຖິງຈຸດທີ່ເຮົາມາຮອດນີ້ ອາດເປັນແຮງບັນດານໃຈໃຫ້ເຮົາສູ້ຕໍ່ໄປ.



**ບົວຜັນ ພຽນອາສາ, ວິສະວະກອນ – ປັບປຸງການຂຸດຄົ້ນແຮ່, ຈາກ ນະຄອນຫຼວງ**

ບົວຜັນ ເປັນແມ່ຍິງຜູ້ດຽວໃນສະມາຊິກ 5 ຄົນ ຂອງທີມງານຂຸດຄົ້ນບໍ່ແຮ່ ທີ່ສາມາດບິນໂດຣນ.

"ຂ້າພະເຈົ້າໄດ້ຝຶກບິນໂດຣນເປັນເວລາ 2 ອາທິດ ແລະ ໄດ້ເລີ່ມບິນໃນຕົ້ນເດືອນ ພຶດສະພາທີ່ຜ່ານມານີ້. ຂ້າພະເຈົ້າເຫັນວ່າ ເວລາທີ່ບິນໂດຣນທີ່ເໝາະສົມທີ່ສຸດແມ່ນຫລັງຈາກ 10 ໂມງເຊົ້າ ເມື່ອແສງພໍດີງາມ ແລະ ໃນເວລາທີ່ບໍ່ມີລົມ. ພະແນກຂອງພວກເຮົານຳໃຊ້ ໂດຣນສຳລັບຫຼາຍໜ້າວຽກ ເປັນຕົ້ນເພື່ອ ກວດກາກິດຈະກຳຊີເຈາະ ແລະ ລະເບີດຫີນ, ເກັບພາບຄວາມຄືບໜ້າຂອງວຽກງານຂຸດຄົ້ນແຮ່ໃນແຕ່ລະບໍ່ ແລະ ໃນແຕ່ລະໄລຍະເວລາຂອງກິດຈະກຳການພັດທະນາ. ການບິນໂດຣນ ເຮັດໃຫ້ເຮົາເຫັນມຸມມອງທີ່ດີໃນການດຳເນີນງານຂອງພວກເຮົາ ເພື່ອໃຫ້ໄດ້ມີຂໍ້ມູນເລິກເຊິ່ງຂຶ້ນຕື່ມ. ໂດຣນ ຈະໃຫ້ພາບທີ່ກວ້າງໄກຈາກຫຼາກຫຼາຍມູມ ທີ່ສາມາດຊ່ວຍໃຫ້ພວກເຮົາສາມາດວາງແຜນ ແລະ ຕັດສິນໃຈໄດ້ເລິກເຊິ່ງຮອບດ້ານຂຶ້ນ."



**ບຸນຕ້ອນ ສິດທິເດດ, ພະນັກງານໄກ່ເກ່ຍ ແລະ ມໍລະດົກວັດທະນະທຳ, ຈາກ ເມືອງວິລະບູລີ**

ບຸນຕ້ອນ ເປັນແມ່ຍິງຜູ້ດຽວໃນສະມາຊິກ 4 ຄົນ ຂອງ ທີມງານພົວພັນກັບຊຸມຊົນທີ່ສາມາດບິນໂດຣນ.

"ຂ້າພະເຈົ້າໄດ້ຝຶກບິນໂດຣນ ເປັນເວລາ 1 ເດືອນ ແລະ ບິນມາໄດ້ 6 ເດືອນພໍດີ. ຂ້າພະເຈົ້າບິນໂດຣນເພື່ອໃຫ້ໄດ້ພາບຊັດເຈນ ຂອງພື້ນທີ່ໆອາດໄດ້ຮັບຜົນກະທົບຈາກໂຄງການຂອງພວກເຮົາ ເຊັ່ນ ໜອງປາ ແລະ ດິນນາຂອງຊຸມຊົນ. ຂ້າພະເຈົ້າຄິດວ່າ ສິ່ງທີ່ສຳຄັນຫຼາຍສຳລັບຜູ້ທີ່ບິນໂດຣນ ແມ່ນຕ້ອງມີສະມາທິສູງ ແລະ ມີໄຫວພິບວ່ອງໄວເວລາ ບິນໃນພື້ນທີ່ຫຍຸ້ງຍາກກັນດານເປັນຕົ້ນຢູ່ເຂດພູຄ້ອຍຊັນ."



# ກອງທຶນພັດທະນາທ້ອງຖິ່ນ ເລັ່ງໃສ່ ປັບປຸງ ຊີວິດການເປັນຢູ່ ຂອງຊຸມຊົນແບບຍືນຍົງ

**5 ທັນວາ 2020** - LXML ໄດ້ມອບ 9 ໂຄງການພາຍໃຕ້ ກອງທຶນພັດທະນາທ້ອງຖິ່ນຂອງບໍລິສັດ ມູນຄ່າລວມທັງໝົດ US$831.982 ໃຫ້ແກ່ເມືອງວິລະບູລີ. ໂຄງການດັ່ງກ່າວເປັນ ສ່ວນໜຶ່ງໃນຄວາມມຸ່ງໝັ້ນທີ່ກໍານົດໃນ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ ສໍາລັບຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ການພັດທະນາຂອງໂຄງການເຊໂປນ. ຈຸດປະສົງຂອງກອງທຶນພັດທະນາທ້ອງຖິ່ນ ແມ່ນເພື່ອຮັບປະກັນໃຫ້ຊຸມຊົນໄດ້ຮັບຜົນປະໂຫຍດຈາກຖະໜົນຫົນທາງທີ່ໄດ້ຮັບການປັບປຸງ ແລະ ມີຄວາມປອດໄພຂຶ້ນ, ການຮັບປະກັນດ້ານສະບຽງອາຫານ, ການສຶກສາ ແລະ ສາທາລະນະສຸກ.

9 ໂຄງການມີ: ການປັບປຸງເສັ້ນທາງ 6 ໂຄງການ ລວມທັງ ເສັ້ນທາງ 28A ໃນເມືອງວິລະບູລີ (US$668.982), ໄຟເຍືອງທາງລະບົບພະລັງງານແສງຕາເວັນ (US$63.000), ການຂະຫຍາຍເນື້ອທີ່ການຜະລິດເຂົ້າໃຫ້ແກ່ປະຊາຊົນໃກ້ບໍ່ຄໍາເຊໂປນ (US$15.000) ແລະ ເຄື່ອງເອັກສະເຣ (X-Ray) ໃຫ້ແກ່ໂຮງໝໍເມືອງວິລະບູລີ (US$85.000).

**ທ່ານ ສະໝານ ອະເນກາ ຜູ້ອໍານວຍການໃຫຍ່** LXML ໄດ້ ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈ ຕໍ່ກັບການປະກອບສ່ວນ ໃນການພັດທະນາເມືອງວິລະບູລີ. ຄວາມມຸ່ງໝັ້ນໃນການສືບຕໍ່ປະກອບສ່ວນນີ້ ຈະຊ່ວຍຮັບປະກັນຊີວິດການເປັນຢູ່ທີ່ດີ ຂອງຊຸມຊົນ ໃຫ້ມີຄວາມໝັ້ນຄົງ ພາຍຫຼັງສິ້ນສຸດອາຍຸການບໍ່ແຮ່."

ນັບຕັ້ງແຕ່ ປີ 2003, ກອງທຶນພັດທະນາທ້ອງຖິ່ນໄດ້ປະກອບສ່ວນກວ່າ US$13 ລ້ານ ເຂົ້າໃນການປັບປຸງໂຄງລ່າງພື້ນຖານ, ສຸຂະພາບຊຸມຊົນ, ການສຶກສາສໍາລັບຄົນຮຸ່ນໃໝ່ ແລະ ການຮັບປະກັນສະບຽງອາຫານ. ກອງທຶນພັດທະນາທ້ອງຖິ່ນ ຊ່ວຍອໍານາດການປົກຄອງເມືອງວິລະບູລີ ໃນການຄຸ້ມຄອງສັງຄົມ ແລະ ຜົນກະທົບທີ່ເກີດຈາກກິດຈະກໍາບໍ່ແຮ່ ແລະ ສະໜັບສະໜູນການປັບປຸງຄຸນນະພາບຊີວິດຂອງຊຸມຊົນໃຫ້ດີຂຶ້ນເລື້ອຍໆ.



**ທ່ານ ຄໍາຂຸຍ ສີບຸນເຮືອງ, ເຈົ້າເມືອງວິລະບູລີ** ກ່າວວ່າ: "ຍ້ອນການສະໜັບສະໜູນຈາກ ບໍລິສັດ LXML ໂດຍຜ່ານກອງທຶນພັດທະນາທ້ອງຖິ່ນ, ການເຂົ້າເຖິງແຫຼ່ງນໍ້າສະອາດ ແລະ ສຸຂະອະນາໄມ, ໂຄງລ່າງພື້ນຖານ, ສຸຂະພາບ, ໄຟຟ້າ, ການສຶກສາ, ກະສິກໍາ ແລະ ການປົກປັກຮັກສາມໍລະດົກວັດທະນະທໍາ ໃນເມືອງວິລະບູລີ ໄດ້ມີຄວາມຄືບໜ້າເປັນກ້າວໆ."

ທ່ານ ກ່າວຕື່ມອີກວ່າ "ຕາງໜ້າອໍານາດການປົກຄອງ ແລະ ປະຊາຊົນຊາວເມືອງວິລະບູລີ, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ຕໍ່ກັບ ບໍລິສັດ LXML ໃນການສະໜັບສະໜູນ ການພັດທະນາເມືອງວິລະບູລີ ຂອງພວກຂ້າພະເຈົ້າ."

ການປະກອບສ່ວນຂອງກອງທຶນພັດທະນາທ້ອງຖິ່ນ ຂອງ LXML ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນໄລຍະຜ່ານມາ ນັບຕັ້ງແຕ່ເລີ່ມການດໍາເນີນງານ ຈາກ US$96.000 ເປັນ US$750.000 ຕໍ່ປີ ເພື່ອຫລຸດຜ່ອນຜົນກະທົບຈາກ ການຂະຫຍາຍໂຄງການບໍ່ແຮ່. ການປະກອບສ່ວນດັ່ງກ່າວນີ້ຈະສືບຕໍ່ໄປອີກຢ່າງໜ້ອຍ 10 ປີ ເພື່ອເປັນການປູພື້ນຖານທີ່ແໜ້ນໜາໃນການພັດທະນາສັງຄົມແບບຍືນຍົງໃນເຂດອ້ອມຂ້າງບໍ່ ເຊໂປນ ພາຍຫຼັງສິ້ນສຸດອາຍຸການບໍ່ແຮ່.



ໃຫ້ກຽດເຂົ້າຮ່ວມເປັນປະທານໃນພິທີມອບ-ຮັບໂຄງການຄັ້ງນີ້ມີ ພະນະທ່ານ ບຸນປອນ ສີສຸລາດ ປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະພາແຫ່ງຊາດ; ທ່ານ ຄໍາຂຸຍ ສີບຸນເຮືອງ ເຈົ້າເມືອງ ວິລະບູລີ; ທ່ານ ຟູ ເສຍເຊີນ ປະທານບໍລິສັດ LXML; ທ່ານ ສະໝານ ອະເນກາ ຮອງຜູ້ອໍານວຍການໃຫຍ່ LXML; ທ່ານ ຄາຣເບເກີ້ ດູລີ້ ຮອງຜູ້ຈັດການໃຫຍ່ຝ່າຍການດໍາເນີນງານ LXML; ທ່ານ ຄໍາໃສ ວິໄລວົງ ທີ່ປຶກສາກິດຕິມະສັກ (ອະດີດເຈົ້າເມືອງວິລະບູລີ) ລວມທັງອໍານາດການປົກຄອງທ້ອງຖິ່ນ, ນາຍບ້ານ, ປະຊາຊົນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ປະຊາຊົນອ້ອມຂ້າງ.

# ບ້ານອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ປະກາດຢຸດຕິການຖ່າຍຊະຊາຍ

**ໃນວັນທີ 2 ມີນາ 2021,** 22 ບ້ານໃນເມືອງ ວິລະບູລີ ໄດ້ປະກາດຢຸດຕິການຖ່າຍຊະຊາຍ.

ໝາກຜົນທີ່ພົ້ນເດັ່ນນີ້ ແມ່ນສານຕໍ່ຈາກ ການນໍາພາທີ່ເຂັ້ມແຂງຂອງລັດຖະບານທ້ອງຖິ່ນ ແລະ ຄວາມພະຍາຍາມ ກໍຄືການຮ່ວມມືທີ່ແໜ້ນແຟ້ນລະຫວ່າງ ເມືອງວິລະບູລີ, ອົງການ UNICEF ແລະ ລຊມລ ໃນການປັບປຸງການເຂົ້າເຖິງ ການບໍລິການນໍ້າສະອາດ, ສຸຂາພິບານ ແລະ ສຸຂາອະນາໄມພື້ນຖານ.

ນັບແຕ່ປີ 2018 ຫາ 2019, ລຊມລ ແລະ UNICEF ໄດ້ຮ່ວມກັນສະໜອງທຶນຊ່ວຍເຫຼືອໃນແຜນງານ ນໍ້າ, ສຸຂາພິບານ ແລະ ສຸຂາອະນາໄມ (WASH) ແນໃສ່ປັບປຸງການເຂົ້າເຖິງຢ່າງທົ່ວເຖິງ ແລະ ນໍາໃຊ້ແຫຼ່ງນໍ້າ, ສຸຂາພິບານ ແລະ ການປະຕິບັດຫຼັກສຸຂາອະນາໄມຢ່າງຖືກຕ້ອງ ຢູ່ໂຮງຮຽນ ແລະ ຢູ່ເຮືອນ ສໍາລັບ ເດັກນ້ອຍ ແລະ ຄອບຄົວທີ່ດ້ອຍໂອກາດທີ່ສຸດໃນ 14 ບ້ານທີ່ໄດ້ຮັບຜົນກະທົບຈາກບໍ່ຄຳ-ທອງເຊໂປນໃນເມືອງວິລະບູລີ.

ລຊມລ ໄດ້ລົງທຶນ US$1.3 ລ້ານ ໃສ່ແຜນງານພັດທະນາຊຸມຊົນ ເພື່ອປັບປຸງການເຂົ້າເຖິງ ສຸຂາພິບານ, ການສະໜອງນໍ້າ ແລະ ການຝຶກອົບຮົມທີ່ກ່ຽວຂ້ອງ.

ມາຮອດປັດຈຸບັນ ມີ ສະມາຊິກຊຸມຊົນ 8.000 ຄົນ ແລະ ນັກຮຽນປະຖົມສຶກສາ 1.500 ຄົນໃນບ້ານເປົ້າໝາຍ ມີນໍ້າສະອາດ ແລະ ຫ້ອງນໍ້າໃຫ້ໃຊ້ ພ້ອມທັງ ການປະຕິບັດຫຼັກສຸຂາອະນາໄມທີ່ດີ ແລະ ສຸຂະພາບ ກໍຄື ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນ.



# 'ຄອນໂດກົບ' ສ້າງຂຶ້ນ ທີ່ເມືອງ ວິລະບູລີ

5 ຄອບຄົວຂອງ ໂຄງການກອງທຶນຊຸກຍູ້ຊີວິດການເປັນຢູ່ໃຫ້ແກ່ກຸ່ມຜູ້ດ້ອຍໂອກາດ (FADG) ໄດ້ສໍາເລັດການຕິດຕັ້ງ 'ຄອນໂດກົບ' ເຊິ່ງ ຈະເຮັດໃຫ້ສາມາດລ້ຽງກົບ ຢ່າງຕໍ່າ 50 ໂຕ ຕໍ່ຄອກ.

ໃນປີ 2020, ໂຄງການ FADG ໄດ້ແນະນໍາ ວິທີການ 'ລ້ຽງກົບຄອນໂດ' ຫຼື ລ້ຽງກົບໃນ 'ຄອນໂດກົບ' ໃຫ້ແກ່ຄອບຄົວທີ່ຕ້ອງການລ້ຽງກົບເພື່ອເປັນອີກທາງເລືອກໜຶ່ງໃນການສ້າງລາຍໄດ້ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນ.

ທັງ 5 ຄອບຄົວຈາກ ບ້ານນໍ້າແລບ, ນາມະລຸ ແລະ ນໍ້າຄຶນນອກ ໄດ້ຮັບການຝຶກອົບຮົມ ກ່ຽວກັບການລ້ຽງກົບຄອນໂດ ເຊິ່ງ ຈະໝູນໃຊ້ ກົງລົດເກົ່າມາເປັນຄອກ. ເພື່ອເປັນການຂ້າເຊື້ອຢາງລົດ ກໍຕ້ອງໄດ້ນໍາເອົາ ຕົ້ນກ້ວຍຕັດເປັນຫຼາຍປ່ຽງຢາຍໃສ່ແຕ່ລະກົງແຊ່ນໍ້າໄວ້ 3 ຫາ 5 ຄືນ, ແລ້ວຈຶ່ງປ່ອຍນໍ້າອອກ ເອົານໍ້າໃໝ່ໃສ່ແທນ. ເມື່ອສໍາເລັດ ແຕ່ລະຄອນໂດ ກໍຈະສາມາດຮອງຮັບ ກົບ ຢ່າງຕໍ່າ 50 ໂຕ.

ການບໍາລຸງຮັກສາ, ເປັນຕົ້ນແມ່ນການປ່ອຍ ແລະ ປ່ຽນນໍ້າ, ແມ່ນຈະຕ້ອງເຮັດທຸກໆ 7 ຫາ 10 ວັນ. ສ່ວນ 3 ຫາ 5 ເດືອນ ກໍຈະໄດ້ຮັບໝາກຜົນ ນໍາກົບໄປກິນ ຫຼື ຂາຍຕໍ່ໄດ້!

ລະດູການເພາະພັນກົບ ແມ່ນໃຊ້ເວລາແຕ່ ເດືອນ ກຸມພາ ຫາ ພຶດສະພາ ຂອງທຸກໆປີ. ແມ່ກົບໜຶ່ງຈະແຜ່ພັນໄດ້ເຖິງ 4 ຊຸດ.





ເນື່ອງໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ ປະຈໍາປີ 2021, LXMLໄດ້ມອບເບ້ຍໄມ້ພັນພື້ນເມືອງຈໍານວນຫຼາຍກວ່າ 200 ເບ້ຍ ໃຫ້ແກ່ແຂວງສະຫວັນນະເຂດ ແລະ ເມືອງ ວິລະບູລີ. ທີມງານພົວພັນທ້ອງຖິ່ນ ຂອງພວກເຮົາໄດ້ຮ່ວມກັບຊຸມຊົນ 5 ບ້ານໃກ້ກັບໂຄງການເຊໂປນ ປ່ອຍປາຈໍານວນ 16,000 ໂຕ.

# ຜົນງານ ປີ 2020

# ຍຸກໃໝ່ແຫ່ງການຜະລິດຄໍາ

2020 ເປັນປີທີ່ບັນລຸຜົນສໍາເລັດຫຼັກໝາຍທີ່ສໍາຄັນຂອງ LXML. ພວກເຮົາຫັນການດໍາເນີນງານຈາກການຜະລິດທອງ ສູ່ການສຸມໃສ່ການຜະລິດຄໍາ ໃນເວລາທີ່ເໝາະສົມທີ່ສຸດ ເມື່ອລາຄາຄໍາໃນຕະຫຼາດໂລກປັບສູງຂຶ້ນ.

LXML ປະສົບຜົນສໍາເລັດໃນການບັນລຸຫຼັກໝາຍທີ່ສໍາຄັນ ກ່ອນຕາລະລາງທີ່ກໍານົດໄວ້, ເຖິງແມ່ນວ່າ ຈະພົບພໍ້ກັບສິ່ງທີ່ທ້າທາຍໃນໄລຍະການແຜ່ລະບາດໃຫຍ່ຂອງພະຍາດ COVID-19. LXML ໄດ້ຂຸດຄົ້ນແຮ່ຄໍາທໍາອິດ, ເປີດນໍາໃຊ້ຄືນໂຮງງານຄໍາທີ່ໄດ້ຮັບການປັບປຸງ ເພື່ອຜະລິດແຮ່ຄໍາຜຸພັງ, ເປີດໂຮງງານທົດລອງການໝ່າແຮ່ເພື່ອຜະລິດແຮ່ທອງຄຸນນະພາບຕໍ່າ, ແລະ ການເປີດໂຮງງານຜະລິດຄໍາເຄົ້າແບບຟູລອຍ.

**LXML ຮັບລາງວັນທຸລະກິດຊັ້ນນໍາດີເດັ່ນ ປະຈໍາ ປີ 2019.** LXML ແມ່ນໜຶ່ງໃນ 55 ບໍລິສັດ ທີ່ໄດ້ຮັບລາງວັນທຸລະກິດຊັ້ນນໍາດີເດັ່ນ ປະຈໍາ ປີ 2019 ສໍາລັບການປະກອບສ່ວນດ້ານເສດຖະກິດ ແລະ ສັງຄົມ ເພື່ອພັດທະນາ ສປປ ລາວ ແບບຍືນຍົງ. ທ່ານ ສະໝານ ອະເນກາ, ຜູ້ອໍານວຍການໃຫຍ່ LXML ຂຶ້ນຮັບໂລ້ກຽດຕິຄຸນ ໃນນາມຕາງໜ້າ LXML. ນີ້ແມ່ນຄັ້ງທີສາມ ທີ່ LXML ໄດ້ຮັບລາງວັນອັນຊົງກຽດນີ້. *(ກຸມພາ 2020)*






**LXML ປະກອບສ່ວນ 100.000.000 ກີບ ຊ່ວຍເຫລືອ ຜູ້ຖືກຜົນກະທົບຈາກອຸທົກກະໄພ ໃນແຂວງສະຫວັນນະເຂດ.** ຕາງໜ້າຮັບການຊ່ວຍເຫຼືອທາງການເງິນ ແມ່ນທ່ານ ສັນຕິພາບ ພົມວິຫານ, ເຈົ້າແຂວງສະຫວັນນະເຂດ, ຕາງໜ້າບໍລິສັດ LXML ມອບໂດຍ ທ່ານນາງ ລັດສະນີ ສີສານ, ຫົວໜ້າສາຍງານພົວພັນລັດຖະບານ. *(ຕຸລາ 2020)*

**LXML ມອບທຶນການສຶກສາໃຫ້ນັກຮຽນ 14ຄົນ ໃນເມືອງວິລະບູລີ.** ການສະໜັບສະໜູນທຶນການສຶກສາ ລວມ US$12.600 ນີ້ ຈະເປີດໂອກາດໃຫ້ນ້ອງນັກຮຽນໄດ້ ສືບຕໍ່ການສຶກສາທີ່ດີກວ່າ ຢູ່ ສະຖາບັນການສຶກສາ ແລະ ມະຫາວິທະຍາໄລຕ່າງໆ ເຊິ່ງຈະນໍາໄປສູ່ ຊີວິດການເປັນຢູ່ດີທີ່ກວ່າເກົ່າໃນຕໍ່ໜ້າ.



**ທ່ານ ພໍ ແຮຣິສ໌, ຜູ້ຈັດການໃຫຍ່ ລຊມລ** ໄດ້ກ່າວວ່າ: “ຂ້າພະເຈົ້າເຊື່ອວ່າ ໂຄງການຊຸກຍູ້ທຶນການສຶກສາເພື່ອໃຫ້ນັກຮຽນໄດ້ໄປຮຽນຕໍ່ ພ້ອມທັງການຊຸກຍູ້ສົ່ງເສີມນັກຮຽນເກັ່ງນັ້ນ ຈະຊ່ວຍພັດທະນາຊັບພະຍາກອນມະນຸດຮຸ່ນຕໍ່ໆໄປທີ່ມີຄວາມອາດສາມາດສູງສຸດ ຂອງຊາດ ແລະ ທັງຈະນໍາສູ່ຜົນປະໂຫຍດທີ່ຍືນຍົງ ແລະ ຍາວນານສໍາລັບຊຸມຊົນ.” *(ກຸມພາ 2020)*



**ປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ລົງກວດກາການອ່າງ ແລວນ້ໍາ ຂອງໂຄງການຄໍາເຊໂປນ.** ພະນະທ່ານ ບຸນປອນ ສີສຸລາດ ກ່າວວ່າ “ຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ໂຄງການເຊໂປນ ທີ່ໄດ້ສືບຕໍ່ຮັກສາມາດຕະຖານສາກົນດ້ານສິ່ງແວດລ້ອມ ໃນລະດັບສູງສຸດ ທີ່ເປັນຕົວແບບໃຫ້ແກ່ໂຄງການອື່ນໆ ໃນສປປ ລາວ” ທ່ານກ່າວຕື່ມອີກວ່າ “ຂ້າພະເຈົ້າຂໍອວຍພອນໃຫ້ບໍລິສັດ LXML ຈົ່ງປະສົບຜົນສໍາເລັດໃນການເປັນຄູ່ຮ່ວມພັດທະນາ ສປປ ລາວ.” *(ທັນວາ 2020)*

**ລັດຖະບານລາວ ອະນຸມັດ ໂຄງການຄໍາເຊໂປນ.** ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ໄດ້ລວບລວມເອົາ ຜົນກະທົບດ້ານສັງຄົມ, ສິ່ງແວດລ້ອມ ແລະ ສຸຂະພາບ ພ້ອມທັງແຜນໃນການຫຼຸດຜ່ອນ ແລະ ການຄຸ້ມຄອງ. ຮູບພາບແມ່ນຕົວຢ່າງ ຂອງການປູກຫຍ້າຟື້ນຟູ ຊຶ່ງເປັນສ່ວນໜຶ່ງຂອງກິດຈະກໍາການຟື້ນຟູແບບຕໍ່ເນື່ອງຂອງບໍ່ເກົ່າ ທີ່ໂຄງການເຊໂປນ. *(ກໍລະກົດ 2020)*



**ແຜນການຄຸ້ມຄອງ ແລະ ຕິດຕາມວຽກງານ ສາທາລະນະສຸກ ໄດ້ຮັບການອະນຸມັດ.** ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) ແລະ ການປະເມີນຜົນກະທົບຕໍ່ສຸຂະພາບ (HIA) ແມ່ນໃຈກາງຂອງການອະນຸມັດຂອງໂຄງການຄໍາ. ຊຶ່ງໄດ້ຍົກໃຫ້ເຫັນເຖິງພາບລວມຂອງໂຄງການ; ປະເມີນສະຖານະດ້ານສິ່ງແວດລ້ອມ, ສັງຄົມ ແລະ ສຸຂະພາບໃນປະຈຸບັນ ກ່ອນການພັດທະນາໂຄງການ; ປະເມີນຜົນກະທົບດ້ານສິ່ງແວດລ້ອມ, ສັງຄົມ ແລະ ສຸຂະພາບ ແລະ ນໍາສະເໜີແນວທາງຫຼຸດຜ່ອນ ແລະ ມາດຕະການຄຸ້ມຄອງ ໃນຕະຫຼອດໄລຍະຂອງອາຍຸການຂອງໂຄງການກໍາ ນັບຕັ້ງແຕ່ກ່ອນການກໍ່ສ້າງ, ເຂົ້າສູ່ໄລຍະການດໍາເນີນ ແລະ ປິດບໍ່. *(ທັນວາ 2020)*



## LXML ຂຸດຄົ້ນແຮ່ຄໍາທໍາອິດ *(ມີນາ 2020)*





**ສະພາແຫ່ງຊາດອະນຸມັດການອ່ວຍແລວນໍ້າຂອງໂຄງການຄໍາເຊໂປນ.** ການອ່ວຍແລວນໍ້ານີ້ມີຄວາມສໍາຄັນ ຕໍ່ກັບໂຄງການຄໍາເຊໂປນ ເພື່ອຮັບປະກັນການເຂົ້າເຖິງສິນແຮ່ຄໍາເຄົ້າ. ການເຂົ້າເຖິງສິນແຮ່ທີ່ຢູ່ກ້ອງແມ່ນໍ້າ ຈະຍືດອາຍຸການບໍ່ແຮ່ເຊໂປນອອກໄປຕື່ມອີກ ແລະ ພ້ອມທັງເປັນການສືບຕໍ່ສ້າງຜົນປະໂຫຍດໃຫ້ແກ່ຜູ້ມີສ່ວນຮ່ວມຂອງເຊໂປນຢ່າງໜ້ອຍແກ 10 ປີ *(ຕຸລາ 2020)*.



**LXML ເປີດນໍາໃຊ້ໂຮງງານທົດລອງຫມ່າແຮ່** ເພື່ອສືບຕໍ່ຜະລິດທອງ. ຂະບວນການໝ່າແຮ່ ເປັນວິທີການທີ່ໃຊ້ຕົ້ນທຶນຕໍ່າກວ່າ ແລະ ຈະຊ່ວຍໃຫ້ໂຄງການເຊໂປນ ສາມາດຜະລິດທອງຈາກແຮ່ທອງເຄົ້າຄຸນນະພາບຕໍ່າທີ່ສຸດທີ່ຍັງຫຼົງເຫຼືອຢູ່ໂຄງການເຊໂປນ. ໂຮງງານໝ່າແຮ່ມີກໍາລັງການຜະລິດທັງໝົດ 900,000 ໂຕນ ແລະ ຈະດໍາເນີນງານໄປຈົນເຖິງປີ 2022. *(ກໍລະກົດ 2020)*



**LXML ເປີດໂຮງງານຜະລິດຄໍາແບບຟູລອຍ.** ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ປອ ຄໍາມະນີ ອິນທິລາດ ແລະ ລັດຖະມົນຕີ ປະຈໍາສໍານັກງານນາຍົກລັດຖະມົນຕີ, ທ່ານ ປອ ຈະເລີນ ເຢຍປາວເຮີ້ ເປີດໂຮງງານໃນວັນທີ 24 ກັນຍາ 2020.




**LXML ສືບຕໍ່ໃຫ້ການສະໜັບສະໜູນ ວຽກງານປົກປັກຮັກສາ ມໍລະດົກວັດທະນະທໍາລາວ** ດ້ວຍການມອບຕູ້ວາງສະແດງ ລວມມູນຄ່າ US$ 25.000 ໃຫ້ແກ່ຫໍພິພິທະພັນແຫ່ງຊາດລາວ ທີ່ນະຄອນຫຼວງວຽງຈັນ, ຫໍພິພິທະພັນແຂວງສະຫວັນນະເຂດ ແລະ ຫໍວັດທະນະທໍາ ເມືອງວິລະບູລີ ເພື່ອແນໃສ່ປົກປັກຮັກສາ ແລະ ສືບຕໍ່ສົ່ງເສີມວັດຖຸບູຮານ ທີ່ຄົ້ນພົບຢູ່ໃນເຂດຂຸດຄົ້ນບໍ່ຄໍາ-ທອງ ເຊໂປນ ໃນເຂດເມືອງວິລະບູລີ, ແຂວງສະຫວັນນະເຂດ. ນີ້ແມ່ນຜົນງານອັນພົ້ນເດັ່ນຂອງ LXML ໃນການສະໜັບສະໜູນລັດຖະບານລາວໃນການສຶກສາດ້ານບູຮານວິທະຍາ ແລະ ປົກປັກຮັກສາມໍລະດົກວັດທະນະທໍາເປັນເວລາຍາວນານກວ່າ 1 ທົດສະວັດ. ນັບຕັ້ງແຕ່ປີ 2008, LXML ໄດ້ລົງທຶນຫຼາຍກວ່າ US$1,3 ລ້ານ ເຂົ້າໃນການສະໜັບສະໜູນ ການອະນຸລັກປະຫວັດສາດລາວ ແລະ ມໍລະດົກວັດທະນະທໍາ ກວ່າ 3.000 ປີ, ຜ່ານການຮ່ວມມືດ້ານການຄົ້ນຄວ້າບູຮານວິທະຍາ . *(ມີນາ 2020)*



ການແຂ່ງຂັນບານເຕະມິດຕະພາບ ລະຫວ່າງ LXML ແລະ ກົມອຸດສະຫະກຳປ້ອງກັນປະເທດ, ກະຊວງປ້ອງກັນປະເທດ ໃນວັນທີ 19 ກຸມພາ 2021. LXML ຊະນະ 7-2.



ພິທີ ບາສີ ປີໃໝ່ລາວ ທີ່ຫ້ອງການ ລຊມລ ທີ່ ນະຄອນຫຼວງວຽງຈັນ ວັນທີ 8 ເມສາ 2021.



ຄຳຂວັນວັນສິ່ງແວດລ້ອມໂລກປີນີ້ ແມ່ນ *'ການຟື້ນຟູລະບົບນິເວດ'*. ທີ່ LXML, ພວກເຮົາເຮັດໜ້າທີ່ຂອງພວກເຮົາດ້ວຍການຟື້ນຟູລະບົບນິເວດ ດ້ວຍການປະຕິບັດຕາມມາດຕະຖານດ້ານສິ່ງແວດລ້ອມໃນການດຳເນີນງານ. ພວກເຮົາປູກພືດຄືນໃນເຂດທີ່ໄດ້ຮັບຜົນກະທົບຈາກກິດຈະກຳບໍ່ແຮ່, ພວກເຮົາປູກຕົ້ນໄມ້ ໃນເຂດທີ່ລົບກວນ, ແລະ ພວກເຮົາຕິດຕາມ ແລະ ຮັບປະກັນຄຸນນະພາບນ້ຳສຳລັບຊຸມຊົນ.

# ຜົນງານຂອງ ບໍ່ຄຳ-ທອງເຊໂປນ ການປະຕິບັດງານ ປີ 2020

ໃນປີ 2020 ລຊມລ ໄດ້ບັນລຸຜົນສຳເລັດສຳຄັນຫຼາຍປະການ. ພວກເຮົາທຸກໆຄົນ ເປັນສ່ວນໜຶ່ງທີ່ສຳຄັນ ເຮັດໃຫ້ຜົນຮັບນີ້ ເປັນໄປໄດ້.

ປີ 2021 ຈະເປັນປີທີ່ທ້າທາຍ. ໂຄງການເຊໂປນຈະເຕີບຕົວຢ່າງຕໍ່ເນື່ອງ. ພວກເຮົາມີແຜນເພີ່ມ ເປົ້າໝາຍການຜະລິດຄຳ ຈາກ 8 ໂຕນ ເປັນ 10 ໂຕນ ໃນປີ 2023. ໂຄງການ ເຊໂປນ 2.5 ແລະ ແຜນງານອື່ນໆ ຈະຂັບເຄື່ອນ ການເຕີບຕົວຂອງເຊໂປນໃນ ອະນາຄົດ.

**ຄວາມປອດໄພ -** ສົມທຽບໃສ່ປີ 2019, ຜົນງານດ້ານຄວາມປອດໄພຂອງພວກເຮົາໄດ້ຖືກຖອຍລົງ ໂດຍອັດຕາ TRIFR ໄດ້ທະວີຄູນຂຶ້ນ ສາມເທົ່າ ຈາກ 0,38 (2019) ເປັນ 1,2 (2020). ອັນນີ້ ຕິດພັນກັບສິ່ງທ້າທາຍໃນການຄຸ້ມຄອງຜູ້ຮັບເໝົາໃນການສ້າງໂຮງງານໃໝ່. ຜົນງານດ້ານຄວາມປອດໄພ ໃນ ໄຕມາດ 4 ຖືວ່າ ດີຢູ່.

ໃນປີ 2021, ພວກເຮົາຕ້ອງຍຶດຖືຫຼັກການ 'ຢຸດ ແລະ ຄິດ' ແລະ 'ເທັກຟາຍ' ເພື່ອ ບັນລຸໃຫ້ໄດ້ເປົ້າໝາຍ ບໍ່ໃຫ້ມີການບາດເຈັບເກີດຂຶ້ນ (ການບາດເຈັບເທົ່າ 0). ໃນປີຜ່ານມາ, ບໍ່ມີເຫດການຮ້າຍແຮງທາງສິ່ງແວດລ້ອມ.

**ການຜະລິດ -** ພວກເຮົາບໍ່ສາມາດບັນລຸເປົ້າໝາຍການຜະລິດທອງ ເຊິ່ງຫລຸດຄາດໝາຍໄປ 18% ແຕ່ວ່າ ສາມາດບັນລຸລື່ນຄາດໝາຍການຜະລິດຄຳ. ໃນປີ 2020 ພວກເຮົາຜະລິດຄຳໄດ້ 2.015,799 ກິໂລກຣາມ.

ໃນປີນີ້ ຜົນການຜະລິດທອງແມ່ນຍັງມີຄວາມສຳຄັນ ຍ້ອນພວກເຮົາຕ້ອງຍາດແຍ່ງໂອກາດໃນເວລາທີ່ລາຄາທອງສູງຂຶ້ນ. ເປົ້າໝາຍການຜະລິດທອງຂອງພວກເຮົາແມ່ນ 6,699 ໂຕນ ແລະ ການຜະລິດຄຳ ແມ່ນ 8 ໂຕນ.

**ການຂຸດຄົ້ນບໍ່ແຮ່ -** ປະລິມານແຮ່ທັງໝົດທີ່ຂົນສົ່ງ ລື່ນຄາດໝາຍ 13% ໄດ້ 32 ລ້ານໂຕນ ສົມທຽບໃສ່ ຄາດໝາຍ 28,3 ລ້ານໂຕນ. ຜົນງານດ້ານການຂຸດເຈາະ ແລະ ລະເບີດ ໄດ້ເພີ່ມຂຶ້ນມະຫາສານໃນເດືອນ ທັນວາ ໃນຂະນະທີ່ ຄວາມພ້ອມຂອງກົນຈັກ ແລະ ການນຳໃຊ້ລົດແກ່ແຮ່ ໄດ້ມີປະສິດທິຜົນດີຂຶ້ນໃນ ໄຕມາດ 4. ເພື່ອສະໜັບສະໜູນເປົ້າໝາຍການຜະລິດ, ພວກເຮົາຕ້ອງປັບປຸງ ປະສິດທິຜົນຂອງວຽກງານຂຸດຄົ້ນບໍ່ແຮ່.

**ການເງິນ -** ພວກເຮົາບັນລຸກຳໄລສຸດທິ US$47 ລ້ານ ລື່ນຄາດໝາຍທີ່ວາງໄວ້ US$40 ລ້ານ ຫຼື 14,5%. ອັນນີ້ ເປັນອີກໜຶ່ງຜົນສຳເລັດພົ້ນເດັ່ນ ເມື່ອຄຳນຶງເຖິງ ຜົນກະທົບຈາກ ການລະບາດພະຍາດ COVID-19. ໃນປີ 2021, ພວກເຮົາຈະເພີ່ມຜົນການຜະລິດ ເພື່ອເພີ່ມລາຍຮັບ ແລະ ຮັກສາ ຕົ້ນທຶນການຜະລິດທີ່ US$780/oz/Au.

**ເຊໂປນ 2.5 -** ເປັນໂຄງການທີ່ແນໃສ່ເພີ່ມກຳລັງການປ້ອນແຮ່ເຂົ້າໂຮງງານຜະລິດ ຈາກ 1.5Mtpa ເປັນ 2.5Mtpa. ພວກເຮົາຈະຕິດຕັ້ງເພີ່ມ ລູກເຫຼັກໂຮງໂມ້, ກຳລັງການສ້າງອົກຊີແຊນ, POX, ລະບົບການຟູລອຍ ແລະ ເພີ່ມຂັ້ນຕອນໃໝ່ ໃນການສະກັດແຮ່ດ້ວຍຄວາມຮ້ອນ ແລະ ສາຍພານ CCD.

**ການສຳຫຼວດ -** ພວກເຮົາຕັ້ງໜ້າດຳເນີນການສຳຫຼວດ ເພື່ອຍືດອາຍຸການບໍ່ເຊໂປນອອກໄປອີກ.

# ລຊມລ ໄດ້ຮັບໃບຍ້ອງຍໍປະເພດ A+

**ເມື່ອວັນທີ 28 ມັງກອນ 2021 -** ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (ລຊມລ) ບໍ່ຄໍາ-ທອງເຊໂປນ ໄດ້ຮັບໃບຍ້ອງຍໍປະເພດ A+ ຈາກ ກະຊວງພະລັງງານ ແລະ ບໍ່ແຮ່. ບໍລິສັດ ລຊມລ ສາມາດຮັກສາຜົນງານປະເພດສູງທີ່ສຸດນີ້ມາແຕ່ປີ 2016 ເມື່ອລັດຖະບານລາວ ໄດ້ ເລີ່ມປະຕິບັດກົນໄກນີ້ເພື່ອຮັບຮູ້ຜົນງານ ແລະ ມາດຕະຖານຂອງບັນດາບໍລິສັດ. ລຊມລ ເປັນບໍລິສັດໜຶ່ງດຽວເທົ່ານັ້ນ ໃນ ສປປ ລາວ ທີ່ໄດ້ຮັບ ລໍາດັບຊັ້ນອັນຊົງກຽດນີ້.

ກະຊວງພະລັງງານ ແລະ ບໍ່ແຮ່ ຈັດປະເພດບັນດາບໍລິສັດ ອີງຕາມ ເປົ້າໝາຍ ແລະ ຫຼັກການການພັດທະນາ. ບໍລິສັດ ລຊມລ ຍາດແຍ່ງຊັ້ນນີ້ມາໄດ້ຍ້ອນ ໄດ້ປະກອບສ່ວນຕໍ່ການພັດທະນາເສດຖະກິດແຫ່ງຊາດ ໂດຍການເປັນຄູ່ຮ່ວມພັດທະນາທ້ອງຖິ່ນ ແລະ ຊຸມຊົນ ແລະ ໄດ້ຮັກສາມາດຕະຖານການປົກປັກຮັກສາສິ່ງແວດລ້ອມຢ່າງເຂັ້ມແຂງ.

ບໍລິສັດ ລຊມລ ຖືກຮັບຮູ້ ສໍາລັບການປັບປຸງຊີວິດການເປັນຢູ່ທີ່ດີຂຶ້ນຂອງຊຸມຊົນ; ການນໍາໃຊ້ເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ; ການສະໜັບສະໜູນຜະລິດຕະພັນ ແລະ ການບໍລິການທ້ອງຖິ່ນ; ເປັນທຸລະກິດທີ່ມີການຂະຫຍາຍ ແລະ ເຕີບຕົວຢ່າງຕໍ່ເນື່ອງ; ແລະ ໄດ້ສະໜັບສະໜູນການຂະຫຍາຍຕົວຂອງຂະແໜງການອື່ນໆ.

ບໍລິສັດ ລຊມລ ປະຕິບັດຄົບຖ້ວນຕາມ 7 ຫຼັກການທີ່ກໍານົດຄື: (i) ປະຕິບັດລະບຽບກົດໝາຍ; (ii) ປະຕິບັດພັນທະຄົບຖ້ວນ, ທັນເວລາ ແລະ ກວດກາໄດ້; (iii) ນັບຖືປະເທດ ແລະ ຊຸມຊົນເຈົ້າພາບ; (iv) ສົ່ງເສີມແຮງງານພາຍໃນ ແລະ ພັດທະນາທັກສະຢ່າງຕັ້ງໜ້າ; (v) ຮັກສາຄວາມປອດໄພ-ສຸຂະພາບຕາມຫຼັກການທີ່ດີຂອງສາກົນ; (vi) ດໍາເນີນທຸລະກິດມີປະສິດທິຜົນ, ໂປ່ງໃສ, ບໍ່ມີຜົນກະທົບຮ້າຍແຮງຕໍ່ສັງຄົມ ແລະ ສິ່ງແວດລ້ອມ; (vii) ມີແຜນຄຸ້ມຄອງສິ່ງແວດລ້ອມ ແລະ ແຜນປິດບໍ່.

**ທ່ານ ສະໝານ ອະເນກາ, ອໍານວຍການໃຫຍ່ ລຊມລ** ກ່າວວ່າ: "ທີ່ ລຊມລ ພວກເຮົາໝາຍໝັ້ນໃນການປະຕິບັດຕາມມາດຕະຖານປະເທດ ແລະ ສາກົນ. ການຍ້ອງຍໍທີ່ໄດ້ຮັບມາຢ່າງຕໍ່ເນື່ອງນີ້ ຈະເປັນສິ່ງຕັກເຕືອນພວກເຮົາໃຫ້ເປັນ ນັກລົງທຶນທີ່ມີຄວາມຮັບຜິດຊອບ ແລະ ເປັນອົງກອນທີ່ດີເພື່ອ ເປັນແບບຢ່າງບໍລິສັດຂຸດຄົ້ນບໍ່ແຮ່ທີ່ດີເລີດ ແລະ ສ້າງຄວາມຮັ່ງມີໃຫ້ແກ່ສັງຄົມ."

ຕັ້ງແຕ່ເລີ່ມດໍາເນີນການຂຸດຄົ້ນ-ຜະລິດຄໍາ-ທອງໃນປີ 2002, ໂຄງການຄໍາ-ທອງເຊໂປນ ໄດ້ຜະລິດແທ່ງຄໍາຫຼາຍກວ່າ 1,2 ລ້ານອອນສ໌ ແລະ ຜະລິດແຜ່ນທອງຫຼາຍກວ່າ 1 ລ້ານໂຕນ; ໄດ້ສ້າງຜົນປະໂຫຍດໂດຍກົງຫຼາຍກວ່າ US$1,5 ຕື້ ໃຫ້ແກ່ ສປປ ລາວ ໂດຍຜ່ານການຈ່າຍພາສີ-ອາກອນ, ພາສີ




ຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ.

ນອກຈາກນັ້ນ ໂຄງການຄໍາ-ທອງເຊໂປນ ຍັງໄດ້ສ້າງຜົນປະໂຫຍດທາງອ້ອມ ດ້ວຍການສ້າງວຽກເຮັດງານທໍາ, ຜ່ານການຝຶກອົບຮົມຕ່າງໆ, ການພັດທະນາຊຸມຊົນ ແລະ ລາຍໄດ້ໃຫ້ແກ່ຜູ້ຮັບເໝົາທ້ອງຖິ່ນ ອັນໄດ້ສ້າງຜົນປະໂຫຍດທາງບວກຢ່າງມະຫາສານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ. ໃນປີ 2003 ກໍຄື ໄລຍະທີ່ໄດ້ມີການນໍາໃຊ້ກໍາລັງແຮງງານສູງສຸດ, ໂຄງການຄໍາ-ທອງເຊໂປນ ໄດ້ສ້າງວຽກເຮັດງານທໍາໄດ້ຫຼາຍກວ່າ 5.000 ຄົນ ແລະ ໄດ້ລົງທຶນຫຼາຍຮ້ອຍລ້ານໂດລາສະຫະລັດ ເຂົ້າໃສ່ການພັດທະນາ ແລະ ການຝຶກອົບຮົມພະນັກງານ. ໃນຊຸມຊົນເມືອງວິລະບູລີ ໄດ້ມີປະຊາຊົນກວ່າ 40.000 ຄົນ ໄດ້ຮັບຜົນປະໂຫຍດຈາກ ໂຄງການພັດທະນາຊຸມຊົນຂອງໂຄງການຄໍາ-ທອງເຊໂປນ ລວມມູນຄ່າ US$13 ລ້ານ ແລະ ລາຍໄດ້ຂອງກຸ່ມທຸລະກິດທ້ອງຖິ່ນກໍໄດ້ທະວີຄູນຂຶ້ນເປັນ US$33 ລ້ານ.

ບໍລິສັດ ລຊມລ ໄດ້ໂຈະ ການຜະລິດຄໍາໃນເດືອນ ທັນວາ 2013 ຍ້ອນ ສິນແຮ່ຄໍາທີ່ຫລຸດລົງ ແລະ ລາຄາຕົກຕໍ່າລົງ. ການກັບຄືນມາຜະລິດຄໍາ ຈະຮັບປະກັນ ໃຫ້ຜົນປະໂຫຍດເຫຼົ່ານີ້ ສືບຕໍ່ເສີມຂະຫຍາຍຂຶ້ນໄປເລື້ອຍໆ. ໂຄງການຄໍາ-ທອງເຊໂປນ ໄດ້ຜະລິດຄໍາຫຼາຍກວ່າ 2 ໂຕນ ໃນປີ 2020.

## ຕົວເລກ ແລະ ຂໍ້ມູນ ທີ່ສໍາຄັນຂອງ ບໍ່ຄໍາ-ທອງເຊໂປນ

### ການພັດທະນາຄວາມສາມາດ

- **US$4** ທຶນການສຶກສາຂັ້ນສານໃຫ້ແກ່ພ/ງລາວ
- **US$0.68** ສະໜັບສະໜູນອຸປະກອນ ຝຶກອົບຮົມ ແກ່ໂຮງຮຽນວິຊາຊີບ ສະຫວັນນະເຂດ
- **40,000** ຊົ່ວໂມງຝຶກອົບຮົມ/ປີ
- **ໂຄງການຝຶກອົບຮົມຂີດຄວາມສາມາດໃນພາກສະໜາມ** (ຄູຝຶກ, ການຝຶກອົບຮົມທາງການ ແລະ ຄຽງຄູ່ກັບການປະຕິບັດວຽກ)

### ຊຸມຊົນ

- **US$51** ລ້ານ – ເກັບກູ້ LXMLUXO (58,500 ລູກ ແລະ ໃນພື້ນທີ່ 5,700ຮຕ)*
- **US$37,8** ລ້ານ – ລາຍຮັບຈາກການພັດທະນາທຸລະກິດຊຸມຊົນ*
- **US$10.4** ລ້ານ – ກອງທຶນພັດທະນາທ້ອງຖິ່ນ*
- **US$3.2** ລ້ານ – ກອງທຶນພັດທະນາບ້ານ (2010 -2018)
- **US$0.54** ລ້ານ – ກອງທຶນຊຸກຍູ້ຊີວິດການເປັນຢູ່ໃຫ້ແກ່ກຸ່ມຜູ້ດ້ອຍໂອກາດ (2019 - ຮອດປັດຈຸບັນ)

### ຊຸມຊົນ

- **US$2.9** ລ້ານ – ໃຫ້ແກ່ລັດທະບານລາວ, ຢູນິເຊບ, ໂຄງການ 1000 ວັນ (2012- ຮອດປັດຈຸບັນ)

### TAX ຜົນປະໂຫຍດແກ່ ສປປ ລາວ

- **US$1.5** ຕື້, ປະກອບສ່ວນລາຍຮັບ (ອາກອນ, ຄ່າຊັບພະຍາກອນ, ເງິນປັນຜົນ)*

### ພະນັກງານ

- ພ/ງ ທັງໝົດ **2,304** (95% ຄົນລາວ)
- ພ/ງ ຄົນລາວ **2,227** ຄົນ
- ພ/ງ ຕ່າງປະເທດ **77** ຄົນ
- ພ/ງ ຜູ້ຮັບເໝົາ **2,661**ຄົນ

### ການບໍລິຈາກ

- **US$3.1** ລ້ານ – ອຸປະກອນການ ແພດ, ໄພນໍ້າຖ້ວມ, ໜ່ວຍກູ້ ໄພສຸກເສີນ, ອານຸລັກມໍລະດົກວັດທະນະທໍາແຫ່ງຊາດອື່ນໆ*

*(ຕົວເລກຮອດ ພຶດສະພາ 2021)*

## ຜົນປະໂຫຍດໂດຍກົງ ໃຫ້ແກ່ ລັດຖະບານ ສປປ ລາວ

| ປະເພດລາຍຈ່າຍ | 2003 | 2004 | 2005 | 2006 | 2007 | 2008 | 2009 | 2010 | 2011 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ອາກອນກໍາໄລ | - | - | 7,085 | 49,597 | 90,416 | 77,982 | 57,519 | 92,273 | 145,250 | 120,200 | 91,045 | 71,339 | 36,151 | - | - | - | 2,000 | 2,200 |
| ຄ່າຊັບພະຍາກອນ (ຄໍາ) | 1,407 | 1,669 | 3,112 | 4,376 | 3,347 | 3,549 | 4,732 | 5,800 | 5,024 | 5,491 | 2,538 | 29 | - | - | - | - | - | 3,500 |
| ຄ່າຊັບພະຍາກອນ (ທອງ) | - | - | 4,055 | 16,994 | 19,295 | 18,570 | 14,565 | 20,734 | 31,365 | 30,378 | 30,607 | 27,579 | 22,093 | 17,226 | 17,533 | 20,989 | 19,061 | 11,007 |
| ອາກອນລາຍໄດ້ | 1,101 | 1,538 | 1,943 | 1,947 | 2,727 | 3,893 | 3,377 | 5,053 | 5,055 | 5,877 | 5,728 | 4,404 | 3,767 | 2,644 | 2,511 | 2,562 | 2,332 | 2,549 |
| ຄ່າສໍາປະທານທີ່ດິນ | 5 | 33 | 33 | 33 | - | - | 113 | - | 90 | - | 145 | 50 | 50 | 49 | 49 | 49 | 61 | 61 |
| ພາສີນໍ້າມັນ | - | - | 2,000 | 2,000 | 2,000 | 4,200 | 2,000 | 2,500 | 4,835 | 4,822 | 4,152 | 3,863 | 4,360 | 2,686 | 3,920 | 3,786 | 4,695 | 6,932 |
| ເງິນປັນຜົນ | - | - | - | - | 9,303 | 11,300 | 2,000 | 32,900 | 15,000 | 28,500 | 10,000 | 10,000 | 6,500 | - | - | 27,170 | - | - |
| ລວມລາຍຮັບທັງໝົດ ຈ່າຍໃຫ້ລັດຖະບານ ລາວ | 2,508 | 3,207 | 18,228 | 74,947 | 127,087 | 122,994 | 84,306 | 159,259 | 205,639 | 189,133 | 144,215 | 117,265 | 72,871 | 26,122 | 24,014 | 54,559 | 28,597 | 26,838 |
| **ລວມທັງໝົດ** | - | - | - | - | - | - | 433,278 | 592,536 | 798,176 | 987,309 | 1,131,525 | 1,248,789 | 1,328,966 | 1,364,449 | 1,388,463 | 1,443,022 | 1,471,619 | 1,498,457 |

ຕົວເລກທັງໝົດເປັນ US$ ຫົວພັນ ('000)

ຕິດຕໍ່ພວກເຮົາທີ່:
ໂທ: +856 21 268 268
ອີເມວ: lxml.infomation@lxml.la

ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万 象 矿 业 有 限 公 司
CHIFENG LXML SEPON